# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25 - 31 ສິງຫາ 2023
ປີທີ 12
ສະບັບທີ 935
ລາຍສັປະດາ


## ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະສັນຕິພາບຫວຽດນາມ



(ສພຊ) ວັນທີ 22 ສິງຫາ 2023 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ອວງ ຈູລີວ ອະດີດກຳມະການສູນກາງພັກ, ອະດີດຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ໃນລະຫວ່າງວັນທີ 19-22 ສິງຫາ 2023 ເພື່ອປຶກສາຫາລືກ່ຽວກັບສະພາບການພາກພື້ນ, ສາກົນ ແລະ ແລກປ່ຽນບົດຮຽນການເຄື່ອນໄຫວການທູດປະຊາຊົນ.

ໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງ ແລະ ສະແດງຄວາມຕ້ອນຮັບຢ່າງອົບອຸ່ນຕໍ່ການມາຢ້ຽມຢາມ ຂອງຄະນະຜູ້ແທນຄະນະສັນຕິພາບຫວຽດນາມ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການຮັດແໜ້ນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ໄດ້ຮັບການເສີມຂະຫຍາຍ

ອ່ານຕໍ່ໜ້າ 2

## ສານສະແດງຄວາມຊົມເຊີຍ ປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ ຄົນໃໝ່



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ນະຄອນຫລວງວຽງຈັນ, ວັນທີ 22 ສິງຫາ 2023

ພະນະທ່ານ ນາງ ກິດຕິສັງຫັກບັນດິດ ຄູນ ສຸດາລີ
ປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ
ທີ່ ນະຄອນຫຼວງພະນົມເປັນ

ພະນະທ່ານ ທີ່ນັບຖື,

ໃນນາມສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈ ມາຍັງ ພະນະທ່ານ ທີ່ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ ໃນກອງປະຊຸມຄັ້ງປະຖົມມະລືກ ຂອງສະພາແຫ່ງຊາດ ຊຸດທີ VII, ໃນວັນທີ 21 ສິງຫາ 2023.

ການທີ່ພະນະທ່ານ ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດຍິງ ຜູ້ທຳອິດ ຂອງຣາຊະອານາຈັກກຳປູເຈຍ ນັບຕັ້ງແຕ່ສ້າງຕັ້ງສະພາແຫ່ງຊາດ ເປັນຕົ້ນມານັ້ນ ເປັນການຕີລາຄາສູງ, ສະແດງເຖິງຄວາມໄວ້ວາງໃຈ ຂອງພັກ, ລັດ ແລະ ປະຊາຊົນກຳປູເຈຍ ທີ່ມີຕໍ່ພະນະທ່ານ ຜູ້ທີ່ມີປະສົບການ ໃນໄລຍະຜ່ານມາ.

ຂ້າພະເຈົ້າ ຫວັງເປັນຢ່າງຍິ່ງວ່າ ຈະໄດ້ເຮັດວຽກຮ່ວມ ກັບພະນະທ່ານ ແລະ ຄະນະນຳ ຂອງສະພາແຫ່ງຊາດກຳປູເຈຍ ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນ ສອງປະເທດລາວ-ກຳປູເຈຍ, ຄວາມວັດທະນາຖາວອນ ຂອງສອງຊາດພວກເຮົາ ແລະ ພ້ອມກັນເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອ ແລະ ການຮ່ວມມື ທີ່ມີມາແຕ່ດົນນານ ແລະ ການເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກຳປູເຈຍ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ສອງອົງການນິຕິບັນຍັດ ໃຫ້ນັບມື້ນັບຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ.

ຂໍອວຍພອນໄຊອັນປະເສີດ ມາຍັງພະນະທ່ານ ແລະ ບັນດາສະມາຊິກສະພາແຫ່ງຊາດກຳປູເຈຍ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ປະສົບຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ວຽກງານອັນສູງສົ່ງ ຂອງຕົນ.

ດ້ວຍຄວາມນັບຖືຢ່າງສູງ,

ປອ. ໄຊສົມພອນ ພົມວິຫານ
ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ

## ປະເມີນກົດໝາຍ ໃນຂົງເຂດສະພາແຫ່ງຊາດ ທີ່ແຂວງສະຫວັນນະເຂດ



(ສພຊ) ປະຕິບັດຕາມແຜນປັບປຸງກົດໝາຍໃນຂົງເຂດສະພາແຫ່ງຊາດ, ກອງປະຊຸມປະເມີນກົດໝາຍ 4 ສະບັບໃນຂົງເຂດສະພາແຫ່ງຊາດ ປະກອບມີ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນວັນທີ 21-22 ສິງຫາ 2023 ທີ່ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ ນະຄອນໄກສອນ ພົມວິຫານ ແຂວງສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ,

ອ່ານຕໍ່ໜ້າ 2

## ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ປາຖະກະຖາວັນສຳຄັນຂອງພັກ ແລະ ຂອງຊາດ



(ສພຊ) ເພື່ອໃຫ້ສະມາຊິກພັກທີ່ວອີງຄະນະພັກນະຄອນຫຼວງວຽງຈັນ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງ, ກຳແໜ້ນ ແລະ ເປັນເອກະພາບຕໍ່ເນື້ອໃນທີ່ນຳມາເຜີຍແຜ່ປາຖະກະຖາຄັ້ງນີ້ ທັງສາມາດນຳເອົາໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານ ແລະ ການດຳລົງຊີວິດຕົວຈິງໃຫ້ເກີດດອກອອກຜົນ; ເວົ້າລວມ, ເວົ້າສະເພາະ ເພື່ອຍົກສູງທັດສະນະຫຼັກໝັ້ນ, ຄຸນທາດການເມືອງຂອງສະມາຊິກພັກ-ພະນັກງານໃຫ້ສືບຕໍ່ມີຄວາມໜັກແໜ້ນ, ເຂັ້ມແຂງ, ເສີມຂະຫຍາຍດ້ານດີ, ແກ້ໄຂຈຸດອ່ອນ, ມີແບບແຜນດຳລົງຊີວິດທີ່ປອດໃສ, ມີຄວາມສາມັກຄີພາຍໃນເປັນປຶກແຜ່ນ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມເສຍສະຫຼະປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີຜົນສຳເລັດ, ມີປະສິດທິພາບ ແລະ ປະສິດທິຜົນຢ່າງແທ້ຈິງ.

ໃນວັນທີ 21 ສິງຫາ 2023 ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ, ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ໄດ້ຈັດປາຖະກະຖາວັນລັດຖະທຳມະນູນ ແຫ່ງ ສປປ ລາວ ຄົບຮອບ 32 ປີ (15/8/1991-15/8/2023) ແລະ ວັນຍຶດອຳນາດ

ອ່ານຕໍ່ໜ້າ 2

## ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມການປະເມີນກົດໝາຍ 4 ສະບັບ



(ສພຊ) ເພື່ອເປັນບ່ອນອີງໃຫ້ການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມຮ່າງກົດໝາຍ 4 ສະບັບ ມີຄວາມເໝາະສົມກັບສະພາບຕົວຈິງ, ສອດຄ່ອງກັບກົດໝາຍ ແລະ ຮັບປະກັນປະສິດທິພາບ ແລະ ເປັນການລະດົມສະຕິປັນຍາ, ຄຳຄິດຄຳເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ເພື່ອປັບປຸງກົດໝາຍ 4 ສະບັບໃຫ້ຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງ ກ່ອນນຳສະເໜີຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ.

ໃນລະຫວ່າງວັນທີ 21-

ອ່ານຕໍ່ໜ້າ 4

## ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ໄຊຍະບູລີ ຊຸດທີ II



(ສພຊ) ວັນທີ 23 ສິງຫາ 2023 ທີ່ຫ້ອງປະຊຸມໃຫຍ່ແຂວງໄຊຍະບູລີ, ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາ

ອ່ານຕໍ່ໜ້າ 4

## ເລຂາທິການສະພາແຫ່ງຊາດ ເຂົ້າຮ່ວມ ປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ




(ສພຊ) ໃນລະຫວ່າງວັນທີ 21-22 ສິງຫາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ, ກົມເລຂາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4ສະບັບໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ປິ່ງຄຳ

ອ່ານຕໍ່ໜ້າ 3

**ຊົມເຊີຍ ວັນຍຶດອຳນາດ 23 ສິງຫາ 1975 - 23 ສິງຫາ 2023 ຄົບຮອບ 48 ປີ ຢ່າງສຸດໃຈ!**

## ປະທານສະພາ...

(ຕໍ່ຈາກໜ້າ 1)



ແລະ ກ້າວເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ; ພ້ອມນັ້ນ, ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ຊົມເຊີຍຜົນສຳເລັດການພົບປະ 2 ຝ່າຍ ແລະ ຜົນການສຳມະນາ ໃນຫົວຂໍ້: ການທູດປະຊາຊົນ ເຊິ່ງເປັນຫົວຂໍ້ທີ່ສຳຄັນໃນການຮ່ວມມືສອງຝ່າຍ ໃນສະພາບການໂລກ, ພາກພື້ນພວມມີຄວາມສັບສົນ ແລະ ການທູດປະຊາຊົນ ພວມມີບົດບາດສຳຄັນຫຼາຍ; ສອງຝ່າຍໄດ້ມີກົນໄກແລກປ່ຽນຂໍ້ມູນ-ຂ່າວສານ, ແລກປ່ຽນບົດຮຽນ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີພາກພື້ນ ແລະ ສາກົນ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃນການເສີມສ້າງມິດຕະພາບ, ສັນຕິພາບ ແລະ ການຮ່ວມມື ເພື່ອການພັດທະນາຢູ່ທັງພາຍໃນປະເທດ ກໍຄືໃນພາກພື້ນ ແລະ ສາກົນ, ຂໍໃຫ້ຈົ່ງສືບຕໍ່ຮ່ວມມືກັນຢ່າງແໜ້ນແຟ້ນ ແລະ ໃຫ້ການສະໜັບສະໜູນຊ່ວຍເຫຼືອ ເຊິ່ງກັນແລະກັນ ໃນການເຄື່ອນໄຫວຢູ່ໃນເວທີພາກພື້ນ ແລະ ສາກົນ. ສຳລັບການພົວພັນຮ່ວມມື ລະຫວ່າງ ສອງສະພາແຫ່ງຊາດລາວ ແລະ ຫວຽດນາມ ໃນໄລຍະຜ່ານມາແມ່ນໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄດ້ນຳເອົາຜົນປະໂຫຍດຕົວຈິງມາສູ່ສອງອົງການນິຕິບັນຍັດ ໂດຍສະເພາະໃນປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ຜ່ານມາ, ສອງສະພາຂອງສອງປະເທດ ກໍໄດ້ຮ່ວມກັນຈັດຫຼາຍກິດຈະກຳເພື່ອສະເຫຼີມສະຫຼອງວັນດັ່ງກ່າວ. ພ້ອມນັ້ນ, ທັງສອງສະພາແຫ່ງຊາດ ຍັງໄດ້ມີການຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA), ກອງປະຊຸມສະມັດຊາໃຫຍ່ຂອງສະຫະພັນລັດຖະສະພາກົນ (IPU) ແລະ ການເຄື່ອນໄຫວໃນເວທີລັດຖະສະພາອື່ນໆ.

ຈາກນັ້ນ, ສະຫາຍ ອອງ ຈູລິວ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ສະຫາຍປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມໄດ້ລາຍງານໃຫ້ຮູ້ກ່ຽວກັບຈຸດປະສົງຂອງການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້, ພ້ອມທັງອວຍພອນແດ່ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ-ຫວຽດນາມ ຈົ່ງສືບຕໍ່ໄດ້ຮັບການເສີມຂະຫຍາຍ ໃຫ້ກ້າວເຂົ້າສູ່ລວງເລິກຢ່າງສວຍສົດງົດງາມ ແລະ ເກີດດອກອອກຜົນຊົ່ວກາລະນານ.

## ປະເມີນກົດໝາຍ...

(ຕໍ່ຈາກໜ້າ 1)

ທ່ານ ນາງ ຫຼີງທອງ ແສງຕາວັນ ຮອງເຈົ້າແຂວງໆສະຫວັນນະເຂດ; ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານເຈົ້າເມືອງ, ເຈົ້າຄອງນະຄອນໄກສອນພົມວິຫານ, ຫົວໜ້າພະແນກການ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຕ່າງໆ, ສອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອຳນວຍການໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງ, ອະດີດສະມາຊິກສະພາແຫ່ງຊາດ ແລະ ອະດີດການນຳພັກ-ລັດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວເປີດກອງປະຊຸມ ເຊິ່ງໄດ້ເນັ້ນໜັກວ່າ: ກົດໝາຍທັງ 4 ສະບັບດັ່ງກ່າວ ມີຄວາມສຳຄັນ ແລະ ມີຄວາມໝາຍຫຼາຍຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຊິ່ງທັງ 4 ກົດໝາຍຕິດພັນເຊິ່ງກັນແລະກັນ ໂດຍສະເພາະກ່ອນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຈະເຄື່ອນໄຫວໄດ້ກໍຕ້ອງມີການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນປະຊາຊົນບັນດາເຜົ່າໄດ້ມອບສິດ ແລະ ອຳນາດໃຫ້ແກ່ຕົວແທນຂອງຕົນ ມາປະຕິບັດສິດ ແລະ ໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ; ກົດໝາຍ 4 ສະບັບດັ່ງກ່າວ ໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງແລ້ວ ແລະ ການປັບປຸງກົດໝາຍແຕ່ລະຄັ້ງ ໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ດີຂຶ້ນ. ເຖິງຢ່າງໃດກໍຕາມ, ການປັບປຸງໄລຍະຜ່ານມາ ກໍບໍ່ທັນໄດ້ປະຕິບັດສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ໂດຍສະເພາະຂັ້ນຕອນການປະເມີນການຈັດຕັ້ງປະຕິບັດ ແລະ ທາບທາມກົດໝາຍ ຍັງບໍ່ທັນກວ້າງຂວາງ; ສະນັ້ນ, ຈຶ່ງມີຄວາມຈຳເປັນໃນການປັບປຸງອີກ ເພື່ອໃຫ້ແທດເໝາະສະພາບຕົວຈິງຂອງປະເທດເຮົາ.

ການປະເມີນຄັ້ງນີ້ ກໍເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມ ເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍ ເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ. ການປັບປຸງກົດໝາຍດັ່ງກ່າວ ຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງຂຶ້ນຕື່ມ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ ຮັບປະກັນໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.



ໃນກອງປະຊຸມ, ຄະນະຮັບຜິດຊອບໄດ້ຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຢ່າງຟົດຟື້ນ ເປັນຈຳນວນ 47 ທ່ານ ຍິງ 9 ທ່ານ ຕໍ່ເນື້ອໃນຂອງມາດຕາຕ່າງໆຂອງກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໄປແຕ່ລະໝວດແຕ່ລະມາດຕາ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນໄລຍະໃໝ່ ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ສູງຂຶ້ນ.

**(ນາງ ປາກາລັກ ພົມມີໄຊ)**

## ເລື່ອງເດັ່ນຂ່າວເດັດ

***# ຄັດໂດຍ: ທອມສະນິດ***

*❒ມະຫາວິທະຍາໄລແຫ່ງຊາດ (ມຊ) ໄດ້ຈັດການສອບເສັງຄັດເລືອກເອົານັກສຶກສາໃໝ່ ປະຈຳສົກສຶກສາ 2023-2024 ທີ່ ມຊ ເຊິ່ງປີນີ້ມີນັກຮຽນ ມາລົງທະບຽນເຂົ້າສອບເສັງທັງໝົດ 7.441 ຄົນ ໂດຍແບ່ງອອກເປັນ 2 ກຸ່ມ ຄື: ກຸ່ມ A ມີຜູ້ລົງທະບຽນເສັງ 2.284 ຄົນ ແລະ ກຸ່ມ B ມີຜູ້ລົງທະບຽນສອບເສັງ 5.155 ຄົນ. ໃນຈຳນວນຜູ້ລົງທະບຽນສອບເສັງທັງໝົດແມ່ນຄັດເລືອກເອົາ 6.688 ຄົນ (ທັງໃນແຜນ ແລະ ນອກແຜນ).*

***ໜສພ. ປະຊາຊົນ 16/08/2023***

*❒ ໃນໄລຍະ 6 ເດືອນຕົ້ນປີ 2023 ນີ້, ລັດວິສາຫະກິດໄຟຟ້າລາວ ສາມາດຈຳໜ່າຍໄຟຟ້າ ໄດ້ທັງໝົດ 7.249,14 ກິກກາວັດ (GWh) ເປັນເງິນ 8.187,58 ຕື້ກີບ, ທຽບໃສ່ໄລຍະດຽວກັນຂອງປີ 2022 ພະລັງງານເທົ່າກັບ 100,40%. ໃນຂະນະທີ່ 6 ເດືອນຕົ້ນປີ 2023 ນີ້, ລັດວິສາຫະກິດໄຟຟ້າລາວ ມີພະລັງງານພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດທັງໝົດ 7.852,30 ກິກກາວັດ (GWh) ເປັນເງິນ 9.007,49 ຕື້ກີບ, ໃນນັ້ນ, ຊື້ພະລັງງານພາຍໃນປະຕິບັດໄດ້ 6.607,49 GWh, ນຳເຂົ້າພະລັງງານຈາກຕ່າງປະເທດປະຕິບັດໄດ້ 1.223,06 GWh.*

***ໜສພ. ປະເທດລາວ 16/08/2023***



## ຄະນະໂຄສະນາ...

(ຕໍ່ຈາກໜ້າ 1)

23 ສິງຫາ ຄົບຮອບ 48 ປີ (23/8/1975-23/8/2023); ໂດຍການເປັນປະທານ ແລະ ໃຫ້ກຽດປາຖະກະຖາອັນສຳຄັນດັ່ງກ່າວຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີຮອງເລຂາຄະນະພັກ, ກຳມະການປະຈຳພັກ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ກຳມະການພັກ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຮັບຟັງ.

ໃນພິທີ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ຍົກໃຫ້ເຫັນການກຳເນີດຂອງລັດຖະທຳມະນູນ, ຄວາມໝາຍ ແລະ ຄວາມສຳຄັນຂອງລັດຖະທຳມະນູນ ແຫ່ງ ສປປ ລາວ, ການເພີ່ມທະວີໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃຫ້ເຂັ້ມງວດ ແລະ ມີປະສິດທິຜົນ ທັງຍັງໄດ້ຍົກໃຫ້ເຫັນປະຫວັດ ແລະ ມູນເຊື້ອອັນດີງາມຂອງຊາວນະຄອນຫຼວງວຽງຈັນ, ພາລະກິດຍຶດອຳນາດ ວັນທີ 23 ສິງຫາ 1975 ພາຍໃຕ້ການນຳພາຂອງພັກ ປະຊາຊົນ ປະຕິວັດລາວ ແລະ ໄດ້ເນັ້ນໃຫ້ຊາວນະຄອນຫຼວງວຽງຈັນ ສືບຕໍ່ເສີມຂະຫຍາຍມູນເຊື້ອ ວັນທີ 23 ສິງຫາ.

**(ໄຊໂສພາພອນ ມິ່ງມຸງຄຸນ)**

## ເລຂາທິການ...

(ຕໍ່ຈາກໜ້າ 1)

ລາຊະສິມມາ ເລຂາທິການສະພາແຫ່ງຊາດ ແລະ ທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ, ປະທານສະພາປະຊາຊົນແຂວງ; ມີທ່ານຮອງເຈົ້າແຂວງ, ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ພະແນກການອ້ອມຂ້າງແຂວງ, ອົງການລັດຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດຂັ້ນທ້ອງຖິ່ນ; ກົດໝາຍ 4 ສະບັບ ທີ່ນຳມາປະເມີນໃນຄັ້ງນີ້ ມີຄວາມສຳຄັນ ແລະ ມີຄວາມໝາຍຫຼາຍ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຍ້ອນວ່າ 4 ກົດໝາຍນີ້ ແມ່ນຕິດພັນເຊິ່ງກັນແລະກັນ ເປັນຕົ້ນ ກ່ອນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ຈະເຄື່ອນໄຫວໄດ້ກໍຕ້ອງມີການເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງເປັນຕົວແທນຂອງປະຊາຊົນບັນດາເຜົ່າມາປະຕິບັດໜ້າທີ່ຢູ່ສະພາ; ສະນັ້ນ, ຕ້ອງໄດ້ມີການເລືອກຕັ້ງຈາກພົນລະເມືອງລາວ ຜູ້ມີອາຍຸ 18 ປີຂຶ້ນໄປ ຫຼື ເອີ້ນວ່າຜູ້ມີສິດເລືອກຕັ້ງ, ບຸກຄະລາກອນເຫຼົ່ານັ້ນ ຈະເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນມີປະສິດທິພາບ ແລະ ປະສິດທິຜົນ ຫຼື ບໍ່ ກໍຕ້ອງມີນິຕິກຳເປັນບ່ອນອີງໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຢ່າງຊັດເຈນ, ສອດຄ່ອງກັບສະພາບຕົວຈິງຂອງປະເທດພວກເຮົາ ເຊິ່ງໃນໄລຍະຜ່ານມາ, ກົດໝາຍ 4 ສະບັບ ນັບແຕ່ວັນຮັບຮອງສະບັບທຳອິດເປັນຕົ້ນມາ ກໍໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງແລ້ວ ເຊັ່ນ: ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ປັບປຸງມາແລ້ວ 5 ຄັ້ງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ ປັບປຸງມາແລ້ວ 6 ຄັ້ງ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປັບປຸງ 2 ຄັ້ງ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ປັບປຸງ 1 ຄັ້ງ. ການປັບປຸງກົດໝາຍແຕ່ລະຄັ້ງ ກໍໄດ້ເປັນບ່ອນອີງສຳຄັນແກ່ການເຄື່ອນໄຫວຂອງສະພາໃຫ້ນັບມື້ດີຂຶ້ນ; ພ້ອມນັ້ນ, ທ່ານຍັງໄດ້ກ່າວຕື່ມອີກວ່າ: ການປະເມີນຄັ້ງນີ້ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມ ເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍ ເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ. ຖ້າກົດໝາຍດັ່ງກ່າວ ໄດ້ຖືກຮັບຮອງແລ້ວ ຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງຂຶ້ນຕື່ມ, ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາແລະສ້າງສາປະເທດຊາດຂອງພວກເຮົາ ຮັບປະກັນເຮັດໃຫ້ສະຖຽນລະພາບທາງດ້ານການເມືອງມີຄວາມໝັກແໜ້ນ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.




ທຽບເທົ່າຂັ້ນແຂວງ, ສອງກອງກຳລັງ, ບັນດາທ່ານເຈົ້າເມືອງ, ອະດີດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍພະນັກງານ-ລັດຖະກອນຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເຂົ້າຮ່ວມ.

ໃນພິທີ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວເປີດກອງປະຊຸມວ່າ: ກົດໝາຍ 4 ສະບັບ ແມ່ນຕິດພັນໂດຍກົງກັບການກຳນົດໂຄງປະກອບ, ກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ສຳລັບສະພາແຫ່ງຊາດເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ; ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ; ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ. ສ່ວນສະພາປະຊາຊົນຂັ້ນແຂວງ ກໍເປັນອົງການອຳນາດລັດຂັ້ນທ້ອງຖິ່ນ, ປະຕິບັດພາລະບົດບາດພິຈາລະນາ ແລະ ຮັບຮອງເອົານິຕິກຳສຳຄັນຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ

ກອງປະຊຸມ ໄດ້ຮັບຟັງການຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ,ຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນຕໍ່ບົດປະເມີນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວແລະຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມມີຄວາມຮັດກຸມສອດຄ່ອງກັບສະພາບຄວາມເປັນຈິງໃນການຈັດຕັ້ງປະຕິບັດ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ກົງໃຈ ແສງອຳພັນ)**

## ລະດົມຄວາມຄິດເຫັນ ໃສ່ຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ

(ສພຊ) ເພື່ອລະດົມຄວາມຄິດເຫັນ ໃນການປັບປຸງເນື້ອໃນຂອງຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ ສຳລັບການຝຶກອົບຮົມ, ການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ; ເພື່ອແລກປ່ຽນຄຳຄິດຄຳເຫັນຕໍ່ເນື້ອໃນຂອງຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ສົມບູນ, ມີຫຼັກວິທະຍາສາດ, ສອດຄ່ອງກັບສະພາບຄວາມເປັນຈິງ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງເພື່ອຈະນຳເອົາຂໍ້ມູນຕ່າງໆຈາກການປະກອບຄຳຄິດຄຳເຫັນ ໄປຄົ້ນຄວ້າປະກອບໃສ່ບັນດາເນື້ອໃນຮ່າງບົດຄົ້ນຄວ້າວິທະຍາ ສາດ ແລະ ຫຼັກສູດ ໃຫ້ມີຜົນສຳເລັດຕາມແຜນການທີ່ວາງໄວ້; ດັ່ງນັ້ນ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດໄດ້ຈັດກອງປະຊຸມລະດົມຄວາມຄິດເຫັນໃສ່ຮ່າງບົດຄົ້ນຄວ້າວິທະຍາສາດ ແລະ ຫຼັກສູດ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໃນລະຫວ່າງວັນທີ 17-18 ສິງຫາ 2023 ທີ່ເມືອງວັງວຽງ, ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ຢ່າງກູ້ ຢ່າງລືໄຊ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ເຂົ້າຮ່ວມມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ມີບັນດາທ່ານຮອງປະທານກຳມາທິການ, ປະທານສະພາປະຊາຊົນແຂວງໄຊສົມບູນ, ບໍລິຄຳໄຊ ແລະ ແຂວງວຽງຈັນ; ຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.



ໃນກອງປະຊຸມ, ທ່ານ ປອ. ຢ່າງກູ້ ຢ່າງລືໄຊ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ໃນໄລຍະ 2 ປີກວ່າທີ່ຜ່ານມາ ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ນຳພາຊີ້ນຳຢ່າງໃກ້ຊິດ ໃນການຈັດກອງປະຊຸມຝຶກອົບຮົມການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານເສນາທິການ ຈຳນວນ 13 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 1.399 ເທື່ອຄົນ ເປັນຍິງ 575 ທ່ານ; ພ້ອມກັນນັ້ນ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ກໍໄດ້ຄົ້ນຄວ້າຫົວຂໍ້ວິທະຍາສາດ ແລະຫຼັກສູດສຳເລັດໂດຍພື້ນຖານ ຈຳນວນ 9 ຫົວຂໍ້, ຈັດພິມປຶ້ມປະມວນມະຕິການຈັດຕັ້ງ ແລະ ການເຄື່ອນໄຫວຂອງບັນດາກົງຈັກຂອງສະພາແຫ່ງຊາດ, ຈັດພິມແຜ່ນພັບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ປຶ້ມປະມວນເອກະສານການສະເຫຼີມສະຫຼອງວັນລັດຖະທຳມະນູນ ຄົບຮອບ 30 ປີ, ຈັດພິມປຶ້ມຄູ່ມືກ່ຽວກັບບາງບົດຮຽນການເຄື່ອນໄຫວຂອງສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ຈຳນວນ 3 ເຫຼັ້ມ, ສ້າງ ແລະ ປັບປຸງລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ແລະ ອື່ນໆ. ຢ່າງໃດກໍຕາມ, ຜ່ານການຈັດກອງປະຊຸມຝຶກອົບຮົມການຍົກສູງຂີດຄວາມສາມາດໃນໄລຍະ 2 ປີກວ່າທີ່ຜ່ານມາ ເຫັນວ່າບາງຫົວຂໍ້ເອກະສານຍັງບໍ່ທັນໄດ້ຄົ້ນຄວ້າຂຽນເປັນຫຼັກສູດ ແລະ ປຶ້ມຄູ່ມືທີ່ເປັນລະບົບ ແລະ ມີເນື້ອໃນຕາມຫຼັກວິທະຍາສາດ-ວິຊາການຢ່າງເລິກເຊິ່ງເທື່ອເຊິ່ງມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າຂຽນເປັນຫົວຂໍ້ວິທະຍາສາດ ແລະ ຫຼັກສູດຕ່າງໆຕາມທີ່ໄດ້ກຳນົດຢູ່ໃນແຜນພັດທະນາການຍົກສູງຂີດຄວາມສາມາດ ກໍຄືແຜນພັດທະນາວຽກງານໄລຍະ 5 ປີ ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດເພື່ອຮັບໃຊ້ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກໍຄືສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການໃຫ້ມີປະສິດທິຜົນດີກວ່າເກົ່າ.

ກອງປະຊຸມປຶກສາຫາລືໃນຄັ້ງນີ້, ໄດ້ພ້ອມກັນຮັບຟັງການສະເໜີຫົວຂໍ້ວິທະຍາສາດ ແລະ ຫຼັກສູດ ສຸມໃສ່ແລກປ່ຽນບົດຮຽນ, ປະກອບຄຳຄິດຄຳເຫັນໃສ່ 4 ຫົວຂໍ້ບົດຄົ້ນຄວ້າຄື: 1. ຄວາມຮູ້ພື້ນຖານກ່ຽວກັບການສ້າງກົດໝາຍ; 2. ທັກສະການພົບປະຜູ້ມີສິດເລືອກຕັ້ງຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; 3. ທັກສະການປະກອບຄຳເຫັນ ແລະ ການຊັກຖາມໃນກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; 4. ບົດບາດຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງກັບແນວຄວາມຄິດການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ; ພ້ອມກັນນັ້ນ, ບັນດາທ່ານຄະນະຮັບຜິດຊອບຄົ້ນຄວ້າໃນແຕ່ລະຫົວຂໍ້, ບັນດາທ່ານຜູ້ແທນກອງປະຊຸມ ໄດ້ມີການຄົ້ນຄວ້າແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນ ຕາມແຕ່ລະຫົວຂໍ້ ເພື່ອເຮັດໃຫ້ເນື້ອໃນຂອງບົດຄົ້ນຄວ້າມີລັກສະນະວິທະຍາສາດ, ຕິດພັນກັບກົດໝາຍ, ມີເນື້ອໃນເລິກເຊິ່ງ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ເກີດປະໂຫຍດສູງສຸດໃນການປະຕິບັດໜ້າທີ່ການເມືອງຂອງບັນດາກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ.

ກອງປະຊຸມດັ່ງກ່າວ, ໄດ້ຮັບທຶນສະໜັບສະໜູນຈາກຄະນະເລຂາທິການສະພາແຫ່ງຊາດ ແລະ ງົບປະມານຊ່ວຍເຫຼືອລ້າຈາກມູນນິທິເອເຊຍ (TAF).

**(ກົງທະນູຄຳ ພິພັດເສລີ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

22 ສິງຫາ 2023 ທີ່ຫ້ອງປະຊຸມໃຫຍ່ແຂວງໄຊຍະບູລີ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7, ຄະນະປະຈຳພັກແຂວງ, ສະມາຊິກສະພາປະຊາຊົນແຂວງ, ພະນັກງານບຳນານ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນຕໍ່ບົດປະເມີນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ແລະ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມມີຄວາມຮັດກຸມສອດຄ່ອງກັບສະພາບຄວາມເປັນຈິງໃນການຈັດຕັ້ງປະຕິບັດ.

**(ສອນສັກ ວັນວິໄຊ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ປະຊາຊົນແຂວງໄຊຍະບູລີຊຸດທີ II, ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງໄຊຍະບູລີ, ເຂົ້າຮ່ວມມີທ່ານ ພົງສະຫວັນ ສິດທະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໄຊຍະບູລີ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ອະດີດການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ໃນວາລະເປີດກອງປະຊຸມ, ທ່ານ ເພັງນິລັນ ຄຳພັນເພັງ ໄດ້ກ່າວວ່າ: ປະຕິບັດຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 60 ວ່າດ້ວຍກອງປະຊຸມສະໄໝສາມັນປະຈຳເດືອນຕົ້ນປີ ຂອງສະພາປະຊາຊົນຂັ້ນແຂວງ; ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 18/ຄປຈ, ລົງວັນທີ 26 ກໍລະກົດ 2023 ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນຂັ້ນແຂວງຊຸດທີ II. ມື້ນີ້, ສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ໄດ້ໄຂກອງປະຊຸມສະໄໝສາມັນເທື່ອທີ 5 ຂອງຕົນຂຶ້ນຢ່າງເປັນທາງການ ເຊິ່ງກອງປະຊຸມຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນທີ່ສຳຄັນດັ່ງນີ້:

1. ບົດລາຍງານໂດຍສັງເຂບ ຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023.

2. ບົດລາຍງານ ຂອງພະແນກແຜນການ ແລະ ການລົງທຶນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະກາງສະໄໝ ຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023;

3. ບົດລາຍງານ ຂອງພະແນກການເງິນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

4. ບົດລາຍງານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ.

5. ບົດລາຍງານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

6. ບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

7. ບົດລາຍງານ ຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

8. ບົດລາຍງານ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 3 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກອງທຶນພັດທະນາຂັ້ນບ້ານ; ຂໍ້ຕົກລົງວ່າດ້ວຍການພັດທະນາກະສິກຳຍືນຍົງ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຊົນລະປະທານ.

9. ບົດລາຍງານ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍການກຳນົດຂອບເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງແຂວງໄຊຍະບູລີ.

10. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍ: ຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງນ້ຳລີນ ແຂວງໄຊຍະບູລີ. (ສ້າງໃໝ່) ຈຳນວນ 1 ສະບັບ.

11. ບົດລາຍງານ ຂອງສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

12. ພິຈາລະນາ ແລະ ຮັບຮອງ ເອົາມະຕິກອງປະຊຸມຈຳນວນ 12 ສະບັບ.

ນອກນັ້ນ, ກອງປະຊຸມຍັງຈະໄດ້ຮັບຟັງການປະກອບຄຳເຫັນ ຂອງຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ, ຮັບຟັງການຂຶ້ນຊີ້ແຈງ ຂອງພາກສ່ວນຕ່າງໆຈຳນວນໜຶ່ງ ຕໍ່ການຊັກຖາມຂອງບັນດາສະມາຊິກສະພາປະຊາຊົນແຂວງ. ພິເສດ: ກອງປະຊຸມໃນຄັ້ງນີ້ ຍັງຈະໄດ້ສຸມໃສ່ປະເມີນຜົນການໃຫ້ຄະແນນຕໍ່ເປົ້າໝາຍທີ່ມາລາຍງານ, ຊີ້ແຈງ, ຕອບຄຳຊັກຖາມ ຕໍ່ກອງປະຊຸມ ແລະ ຈະໄດ້ປະເມີນຄວາມໄວ້ວາງໃຈ ຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຕາມທີ່ກົດໝາຍໄດ້ກຳນົດໄວ້.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຈະໄດ້ດຳເນີນໄປຈົນຮອດວັນທີ 26 ສິງຫາ 2023 ຈຶ່ງຈະສຳເລັດ.

**(ສອນສັກ ວັນວິໄຊ)**




# ກວດກາ ແລະ ອອກໃບຢັ້ງຢືນມາດຕະຖານລະບົບລິບ ແລະ ຂັ້ນໄດເລື່ອນ ຢູ່ອາຄານຫໍສະພາແຫ່ງຊາດ

(ສພຊ) ວັນທີ 19 ມິຖຸນາຜ່ານມາ, ທີ່ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ສົມທົບກັບກົມມາດຕະຖານ ແລະ ວັດແທກ (ກະຊວງອຸດສາຫະກຳ ແລະ ການຄ້າ) ກວດກາມາດຕະຖານ ຂອງລະບົບລິບ-ຂັ້ນໄດເລື່ອນຢູ່ອາຄານຫໍສະພາແຫ່ງຊາດ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ. ນອກຈາກນັ້ນ, ກໍເພື່ອຮັບປະກັນຄວາມປອດໄພ ໃນການນຳໃຊ້ລະບົບລິບ-ຂັ້ນໄດເລື່ອນ ໃນຊ່ວງໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ວັນທີ 26 ມິຖຸນາ-18 ກໍລະກົດ 2023 ໃຫ້ສຳເລັດຕາມຄາດໝາຍ ແລະ ມີປະສິດທິພາບ ປະສິດທິຜົນ, ເຊິ່ງໄດ້ກວດກາລະບົບລິບ ຈຳນວນ 17 ເຄື່ອງ ແລະ ຂັ້ນໄດເລື່ອນ ຈຳນວນ 4 ເຄື່ອງ. ໂດຍການສົມທົບກັນລະຫວ່າງວິຊາການຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ແລະ ວິຊາການຫ້ອງກວດສອບອຸປະກອນພິເສດ (ກົມມາດຕະຖານ ແລະ ວັດແທກ) ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ສຳເລັດຕາມຄາດໝາຍ ແລະ ຈຸດປະສົງທີ່ວາງໄວ້. ຜ່ານການກວດກາຕົວຈິງເຫັນວ່າ ຖືກຕ້ອງຕາມເຕັກນິກສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ. ເຊິ່ງການກວດກາ ແລະ ອອກໃບຢັ້ງຢືນມາດຕະຖານລະບົບລິບ ແລະ ຂັ້ນໄດເລື່ອນ ໃນຄັ້ງນີ້ ອຸປະຖຳໂດຍກົມມາດຕະຖານ ແລະ ວັດແທກ (ກະຊວງອຸດສາຫະກຳ ແລະ ການຄ້າ) ລວມມູນຄ່າ 60 ລ້ານກວ່າກີບ.



ໂອກາດດັ່ງກ່າວ, ທ່ານ ປອ. ເພັດພອນໃຈ ສິນລະປະກິດ ຍັງໄດ້ຕາງໜ້າໃຫ້ຄະນະເລຂາທິການສະພາແຫ່ງຊາດ ສະແດງຄວາມຂອບໃຈ ແລະ ຊົມເຊີຍ ໃນການປະກອບສ່ວນກວດກາ ແລະ ອອກໃບຢັ້ງຢືນມາດຕະຖານ ຂອງລະບົບລິບ-ຂັ້ນໄດເລື່ອນ ຢູ່ອາຄານຫໍສະພາແຫ່ງຊາດ ໃນຄັ້ງນີ້.



# ປາຖະກະຖາວັນລັດຖະທຳມະນູນ ແລະ ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ




(ສພຊ) ສະພາປະຊາຊົນແຂວງອັດຕະປື ໄດ້ຈັດພິທີປາຖະກະຖາວັນລັດຖະທຳມະນູນ ແຫ່ງ ສປປ ລາວ ຄົບຮອບ 32 ປີ (15 ສິງຫາ 1991-15 ສິງຫາ 2023) ແລະ ວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຄົບຮອບ 45 ປີ (4 ສິງຫາ 1978-4 ສິງຫາ 2023) ທີ່ຫໍປະຊຸມໃຫຍ່ຂອງແຂວງ ໂດຍການປາຖະກະຖາຂອງທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະພັກຈຳພັກແຂວງ, ກຳມະການພັກແຂວງ, ເຈົ້າເມືອງ 5 ເມືອງ, ກອງບັນຊາການ ປກຊ-ປກສ, ພະແນກການອ້ອມຂ້າງແຂວງ, ອົງການລັດທຽບເທົ່າ, ອະດີດການນຳພັກ-ລັດ, ລັດວິສາຫະກິດ ແລະ ທະນາຄານ ເຂົ້າຮ່ວມຮັບຟັງທັງໝົດ 400 ກວ່າທ່ານ.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ຍົກໃຫ້ເຫັນວ່າ: ພາຍຫຼັງສະຖາປະນາ ສປປ ລາວ ໃນປີ 1975, ພັກປະຊາຊົນປະຕິວັດລາວ ໄດ້ນຳພາ-ຊີ້ນຳ ແລະ ຈັດຕັ້ງປະຕິບັດ 2 ໜ້າທີ່ຍຸດທະສາດຂອງພັກ ແລະ ໃນວັນທີ 15 ສິງຫາ 1991 ສປປ ລາວ ຈຶ່ງໄດ້ມີລັດຖະທຳມະນູນສະບັບທຳອິດ ເຊິ່ງມີຄວາມສຳຄັນຫຼາຍຕໍ່ປະເທດຊາດ, ປະຊາຊົນ, ພັກ ແລະ ລັດຖະບານເຮົາ ເປັນການຈັດຕັ້ງ, ການເຄື່ອນໄຫວຕະຫຼອດຮອດກົດໝາຍຕ່າງໆທີ່ທາງສະພາແຫ່ງຊາດໄດ້ຮັບຮອງເອົາ ໃນນີ້, ກໍມີລັດຖະບັນຍັດ, ດຳລັດຂອງນາຍົກລັດຖະມົນຕີ, ຂອງລັດຖະບານ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍອີງໃສ່ລັດຖະທຳມະນູນໃນການຄຸ້ມຄອງສັງຄົມ ບໍ່ວ່າລັດຖະທຳມະນູນ ຫຼື ກົດໝາຍທີ່ເປັນລູກຂອງລັດຖະທຳມະນູນ ລ້ວນແຕ່ໄດ້ສະແດງເຖິງເຈດຈຳນົງຂອງປະຊາຊົນລາວບັນດາເຜົ່າ ແລະ ການປະຕິບັດລັດຖະທຳມະນູນ ກໍຄືກັນກັບປະຕິບັດກົດໝາຍ ເປັນການປະຕິບັດຈິດໃຈຂອງປະຊາຊົນລາວ ໂດຍມີສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເປັນຜູ້ຕາງໜ້າໂດຍກົງ. ວັນລັດຖະທຳມະນູນແຫ່ງຊາດ ແມ່ນເຫດການປະຫວັດສາດທີ່ມີຄວາມໝາຍສຳຄັນຍິ່ງ, ເປັນການຢັ້ງຢືນຜົນງານອັນຍິ່ງໃຫຍ່ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເປັນການຢືນຢັນເຖິງເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຕໍ່ສາກົນ ທັງເປັນຂີດໝາຍໃນການຫັນແນວທາງປ່ຽນແປງໃໝ່ອັນມີຫລັກການຂອງພັກ ເປັນກົດໝາຍພື້ນຖານຂອງລັດເຮົາ ແລະ ຫັນໄປສູ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ສືບຕໍ່ສ້າງ ແລະ ປັບປຸງລະບອບປະຊາທິປະໄຕປະຊາຊົນ ຕາມທິດກ້າວຂຶ້ນສັງຄົມນິຍົມບົນພື້ນຖານລັດຖະທຳມະນູນ ແລະ ກົດໝາຍ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍມານີ້, ປະຊາຊົນລາວບັນດາເຜົ່າ ໄດ້ພ້ອມກັນປະຕິບັດສອງໜ້າທີ່ຍຸດທະສາດ, ດຳເນີນພາລະກິດປ່ຽນແປງໃໝ່ ເພື່ອຂຸດຄົ້ນ ແລະ ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ເຂົ້າໃນການສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ, ສ້າງປະຖົມປັດໄຈກ້າວຂຶ້ນສູ່ລະບອບສັງຄົມນິຍົມ ແລະ ມາເຊິ່ງໃນໄລຍະໃໝ່ນີ້ ຊີວິດຂອງສັງຄົມໄດ້ຮຽກຮ້ອງໃຫ້ລັດເຮົາຕ້ອງມີລັດຖະທຳມະນູນ.

ຈາກນັ້ນ, ທ່ານ ນາງ ມີນາພອນ ໄຊສົມພູ ຍັງໄດ້ກ່າວໃຫ້ເຫັນເຖິງວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຄົບຮອບ 45 ປີ (4 ສິງຫາ 1977-4 ສິງຫາ 2023) ໃນຕະຫຼອດໄລຍະຜ່ານມາຈົນເຖິງປັດຈຸບັນ ກໍມີການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຜ່ານຂະບວນການເລືອກຕັ້ງ ບົນພື້ນຖານປະຊາທິປະໄຕ ແລະ ປັບປຸງຊື່ເອີ້ນຈາກສະພາປະຊາຊົນສູງສຸດ ຊຸດທີ I 1975 ມາເປັນສະພາແຫ່ງຊາດ ຊຸດທີ III 1992 ແລະ ຈັດຕັ້ງປະກາດໃຫ້ມີສະພາຂັ້ນທ້ອງຖິ່ນຄື: ສະພາປະຊາຊົນຂັ້ນແຂວງ ຊຸດທີ I ໃນປີ 2016 ເປັນຊຸດທີ່ບຸກເບີກໃໝ່ໃນຖານະເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ, ໄດ້ເຄື່ອນໄຫວວຽກງານຕາມ 3 ພາລະບົດບາດສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງບໍ່ວ່າຈະເປັນໃນດ້ານນິຕິກຳ, ດ້ານການຕິດຕາມ-ກວດກາ ແລະ ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ພ້ອມທັງເຄື່ອນໄຫວພົບປະຢ້ຽມຢາມຖາມຂ່າວຜູ້ມີສິດເລືອກຕັ້ງຂອງຕົນ; ມາເຖິງປັດຈຸບັນ ສະພາປະຊາຊົນຂັ້ນແຂວງອັດຕະປື ກໍໄດ້ສືບຕໍ່ພາລະກິດເຄື່ອນໄຫວວຽກງານຕ່າງໆມີຜົນສຳເລັດຕະຫຼອດມາ, ແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນທີ່ຢື່ນເຖິງສະພາປະຊາຊົນຂັ້ນແຂວງເພື່ອສະເໜີ ແລະ ປະສານສົມທົບໃຫ້ພາກສ່ວນຂັ້ນຕ່າງໆຊ່ວຍຫາທາງແກ້ໄຂ ແລະ ເຮັດສຳເລັດສອງໜ້າທີ່ຍຸດທະສາດການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີຄວາມຈະເລີນກ້າວໜ້າ; ເຊີນຊວນພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງຈົ່ງເຊີດຊູ ແລະ ຍົກສູງສະຕິເປັນເຈົ້າຕົນເອງໃຫ້ດີຂຶ້ນເທື່ອລະກ້າວ.

ທັງນີ້, ກໍເພື່ອໃຫ້ອົງການຈັດຕັ້ງພັກ-ລັດ, ພະນັກງານນຳພາຫຼັກແຫຼ່ງ, ທະຫານ-ຕຳຫຼວດ ແລະ ພະນັກງານ-ລັດຖະກອນ ໄດ້ຮັບຮູ້ເຊື່ອມຊຶມກຳແໜ້ນຢ່າງເລິກເຊິ່ງ ກ່ຽວກັບການເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດໝາຍໃຫ້ມີຄວາມສັກສິດ, ເຊີດຊູນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຍົກສູງສະຕິເຄົາລົບກົດໝາຍ, ເພີ່ມທະວີຄວາມສາມັກຄີປະຊາຊົນບັນດາເຜົ່າ ເພື່ອພ້ອມກັນພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຄົມ ຕາມແນວທາງນະໂຍບາຍຂອງພັກ-ລັດຖະບານໄດ້ວາງໄວ້.

**(ວິນັດ)**

# ສສຊ ປະຈຳເຂດເລືອກຕັ້ງທີ 1 ນວ ແລະ ສສນວ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງໄຊທານີ



(ສພຊ) ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ (ນວ) ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ຢູ່ທີ່ບ້ານພະຂາວ ເມືອງໄຊທານີ ນວ ໃນວັນທີ 21 ສິງຫາ 2023 ໂດຍການນຳພາຂອງທ່ານ ນາງ ສົມປະເສີດ ສີຫາລາດ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 1 ນວ, ຮອງປະທານອົງການແນວລາວສ້າງຊາດ ນວ, ມີ ທ່ານ ຄຳພູວັນ ລາດຊະຈັກ ສະມາຊິກສະພາປະຊາຊົນ ນວ ຊຸດທີ II, ຮອງຫົວໜ້າຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງໄຊທານີ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງໄຊທານີ, ທ່ານ ນາງ ອໍລະໄທ ສັນຕິຄົງຄາ ສສນວ ຊຸດທີ II, ຜູ້ອຳນວຍການໃຫຍ່ບໍລິສັດ ກຣິດຕະພົງກຣຸບ, ຮອງປະທານສະພາບໍລິຫານ ວຽງຈັນເຊັນເຕີ້ ລາວມະຫາຊົນ, ຜູ້ຈັດການທົ່ວໄປ ໂຮງແຮມແລນມາກແມ່ຂອງລີເວີໄຊ, ມີບັນດາອົງການຈັດຕັ້ງບ້ານ ພ້ອມດ້ວຍຜູ້ມີສິດເລືອກຕັ້ງພາຍໃນບ້ານເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວພົບປະຄັ້ງນີ້, ກໍເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II, ເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນ ກໍຄືຜູ້ມີສິດເລືອກຕັ້ງກ່ຽວຂ້ອງກັບບັນຫາທີ່ຂັດຂ້ອງໝອງໃຈຕ່າງໆ ເພື່ອຈະນຳສະເໜີຕໍ່ອົງການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຊິ່ງໃນພິທີດັ່ງກ່າວ, ສສຊ ແລະ ສສນວ ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດຂອງບ້ານ ແລະ ກໍໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຈຳນວນໜຶ່ງຂອງປະຊາຊົນ ເພື່ອນຳໄປຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ ເຊິ່ງບັນຫາສ່ວນໃຫຍ່ ແມ່ນຕິດພັນກັບສະພາບເສດຖະກິດຊີວິດການເປັນຢູ່ຂອງປະຊາຊົນໃນປັດຈຸບັນ ເປັນຕົ້ນແມ່ນລາຄາສິນຄ້າບໍລິໂພກ-ອຸປະໂພກແພງ, ອັດຕາເງິນເຟີ້, ບັນຫາການສຶກສາທີ່ຈົບມາແລ້ວບໍ່ມີວຽກເຮັດງານທຳ, ຂາດຄູສອນ, ບັນດາໄຟເບື້ອງທາງ, ບັນຫານ້ຳຖ້ວມອັ່ງຂັງຢູ່ເຂດບ້ານດັ່ງກ່າວ ແລະ ສະເໜີໃຫ້ມີການຈຳກັດການນຳເຂົ້າສິນຄ້າທີ່ບໍ່ຈຳເປັນ ເພື່ອຊຸກຍູ້ສົ່ງເສີມໃຫ້ປະຊາຊົນຜະລິດນຳໃຊ້ເອງ ແລະ ສ້າງລາຍຮັບໃຫ້ປະຊາຊົນເຫຼົ່ານີ້ເປັນຕົ້ນ.

ໂອກາດດັ່ງກ່າວ, ສສຊ ແລະ ສສນວ ກໍໄດ້ມີຄຳເຫັນແລກປ່ຽນ ແລະ ໄດ້ຮັບເອົາຄຳຄິດຄຳເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນ ເພື່ອນຳໄປສະເໜີໃຫ້ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າພິຈາລະນາ ແລະ ຫາທິດທາງແກ້ໄຂໃນຕໍ່ໜ້າ.

# ມອບ-ຮັບ ໂທລະໂຄ່ງຈາກສະມາຊິກສະພາແຫ່ງຊາດ ເຂດ 4



(ສພຊ) ຕອນບ່າຍຂອງວັນຈັນທີ 21 ສິງຫາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ທ່ານ ນິສິດ ແກ້ວປັນຍາ ທັງເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ຮອງລັດຖະມົນຕີກະຊວງພາຍໃນ ພ້ອມດ້ວຍຄະນະ ໄດ້ມອບໂທລະໂຄ່ງຈຳນວນ 2 ຊຸດ ໃຫ້ສະພາປະຊາຊົນແຂວງ ເຊິ່ງຕາງໜ້າຄະນະປະຈຳສະພາປະຊາຊົນແຂວງຮັບ ໂດຍທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານໃນຄະນະປະຈຳ, ຄະນະເລຂາທິການ, ຮອງປະທານຄະນະກຳມະການ ແລະ ພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໂທລະໂຄ່ງທີ່ນຳມາມອບນີ້ ມີຈຳນວນ 2 ຊຸດ ລວມມູນຄ່າ 9,3 ລ້ານກີບ ເຊິ່ງໄດ້ຈາກການລະດົມທຶນຈາກບໍລິສັດ ພີດີເອວ ເພື່ອຈະມອບຕໍ່ໃຫ້ການປົກຄອງບ້ານພາຍໃນແຂວງອຸດົມໄຊ ໃນການສະໜອງອຸປະກອນຮັບໃຊ້ທີ່ຈຳເປັນເຂົ້າໃນວຽກງານຂອງບ້ານໃຫ້ມີຄວາມສະດວກວ່ອງໄວ ແລະ ດີຂຶ້ນກວ່າເກົ່າ.

ໂອກາດດັ່ງກ່າວ, ທ່ານ ນາງ ຄຳພອນ ພົມມະຈັນ ຍັງໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງຍິ່ງຕໍ່ທ່ານ ນິສິດ ແກ້ວປັນຍາ ທີ່ໃຫ້ຄວາມສຳຄັນ ແລະ ເປັນຫ່ວງເປັນໃຍຕໍ່ຄຳສະເໜີຂອງປະຊາຊົນ ແລະ ໄດ້ລະດົມວັດຖຸປັດໄຈ ເພື່ອນຳໄປມອບໃຫ້ແກ່ປະຊາຊົນເຂດຫ່າງໄກສອກຫຼີກ ແລະ ທ່ານຍັງໄດ້ໃຫ້ຄຳເຫັນວ່າຈະນຳໄປມອບຕໍ່ໃຫ້ບ້ານເປົ້າໝາຍ ນຳໃຊ້ເຂົ້າໃນວຽກງານຕົວຈິງໃຫ້ເກີດຜົນປະໂຫຍດສູງສຸດ.

**(ນັກຂ່າວ ສພຊ ອຸດົມໄຊ)**

# ປະເມີນຄວາມໄວ້ວາງໃຈບຸກຄະລາກອນທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ




(ສພຊ) ໃນລະຫວ່າງວັນທີ 17-18 ສິງຫາ 2023 ສະພາປະຊາຊົນແຂວງວຽງຈັນ ໄດ້ເປີດກອງປະຊຸມປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ຄະນະຮັບຜິດຊອບການປະເມີນເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ລຳໄມ ກູດລາວົງ ໄດ້ຂຶ້ນຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລະກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ເຊິ່ງບຸກຄະລະກອນທີ່ຖືກປະເມີນຄວາມໄວ້ວາງໃຈ ຜູ້ທີ່ດຳລົງຕຳແໜ່ງ ມີ: ສະພາປະຊາຊົນແຂວງວຽງຈັນ ຈຳນວນ 10 ທ່ານ, ອົງການປົກຄອງແຂວງວຽງຈັນ ຈຳນວນ 14 ທ່ານ; ເຈົ້າເມືອງ ຈຳນວນ 11 ທ່ານ; ອົງການຕຸລາການ ຈຳນວນ 2 ທ່ານ ລວມທັງໝົດ 37 ທ່ານ ຍິງ 3 ທ່ານ ເຊິ່ງບຸກຄະລະກອນທີ່ຖືກປະເມີນຄວາມໄວ້ວາງໃຈ ແມ່ນຜູ້ທີ່ດຳລົງຕຳແໜ່ງດັ່ງກ່າວຢ່າງໜ້ອຍ 1 ປີຂຶ້ນໄປ ນັບແຕ່ວັນທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງເຖິງວັນປະເມີນຜົນ.

ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງທ່ານ ບຸນສອນ ເພັດລາວັນ ເຊິ່ງທ່ານໄດ້ຮຽກຮ້ອງໃຫ້ສະມາຊິກສະພາປະຊາຊົນແຂວງ ຈົ່ງເອົາໃຈໃສ່ເພີ່ມທະວີຄວາມຮັບຜິດຊອບສູງຕໍ່ການປະເມີນໃນຄັ້ງນີ້ ເພື່ອໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ ເຊິ່ງການປະເມີນຄັ້ງນີ້, ກໍເພື່ອການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງຕາມກົດໝາຍທີ່ໄດ້ກຳນົດໄວ້ ທັງເພື່ອເຮັດໃຫ້ບັນດາທ່ານບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ເຫັນໄດ້ດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ເສີມຂະຫຍາຍດ້ານດີ, ຕັ້ງໜ້າເຮັດໃຫ້ການຄຸ້ມຄອງ, ການບໍລິຫານວຽກງານໃນອົງການລັດມີການພັດທະນາດີຂຶ້ນເທື່ອລະກ້າວ.

# ສພຂ ຫົວພັນ ສະຫຼຸບຖອດຖອນບົດຮຽນ ກອງປະຊຸມສະໄໝສາມັນເທື່ອທີ 5 ຊຸດທີ II

(ສພຊ) ຕອນແລງວັນທີ 22 ສິງຫາ 2023 ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານ ສພຂ ຫົວພັນ, ມີບັນດາທ່ານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ຈາກທ່ານ ສຸກມີໄຊ ສິງບຸນເຮືອງ ຮອງເລຂາທິການສະພາປະຊາຊົນແຂວງ ເຊິ່ງຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຄົງຄ້າງ ເປັນຕົ້ນແມ່ນດ້ານການກະກຽມເນື້ອໃນ, ບໍລິຫານ-ພິທີການ,ວຽກງານສື່ມວນຊົນ ແລະ ວຽກງານປິ່ນອ້ອມອື່ນໆ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ທີ່ເປີດຂຶ້ນ ໃນລະຫວ່າງວັນທີ 2-4 ສິງຫາ 2023 ຜ່ານມາ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳຄິດເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ເພື່ອນຳເອົາບັນດາເນື້ອໃນຈິດໃຈກອງປະຊຸມຖອດຖອນເປັນບົດຮຽນ ນຳໄປປັບປຸງຈັດຕັ້ງປະຕິບັດວຽກງານ ໃນກອງປະຊຸມສະໄໝສາມັນເທື່ອຕໍ່ໄປໃຫ້ມີຜົນສຳເລັດ ແລະ ດີຂຶ້ນເລື້ອຍໆ.

ຕອນທ້າຍ, ປະທານກອງປະຊຸມ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະນັກງານ-ລັດຖະກອນພາຍໃນ ສພຂ ທີ່ໄດ້ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດໜ້າວຽກຕ່າງໆ ຕາມການມອບໝາຍໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຂ ຫົວພັນ ຊຸດທີ II ມີຜົນສຳເລັດອັນຈົບງາມ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ພະນັກງານທັງໝົດ ຈົ່ງສືບຕໍ່ເສີມຂະຫຍາຍດ້ານດີຜົນງານ,ປັບປຸງແກ້ໄຂບັນຫາ ທີ່ຍັງຄົງຄ້າງ ເປັນຕົ້ນແມ່ນເພີ່ມທະວີຄວາມເປັນເຈົ້າການໃນການກະກຽມເນື້ອໃນກອງປະຊຸມ, ກົນໄກການປະສານງານຮ່ວມກັບອົງການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ທັນກຳນົດເວລາ ເພື່ອເປັນບົດຮຽນໃຫ້ແກ່ການດຳເນີນກອງປະຊຸມຄັ້ງຕໍ່ໄປ ໃຫ້ຮັບປະກັນທາງດ້ານເນື້ອໃນທີ່ມີຄຸນນະພາບດີຂຶ້ນກວ່າເກົ່າ.

**(ເອີນ ແກ້ວບຸນມີ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ ຢູ່ສູນດັດສ້າງຫຼັກ 33

(ສພຊ) ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ເຄື່ອນໄຫວ ຕິດຕາມກວດກາສະພາບການຈັດຕັ້ງປະຕິບັດວຽກງານຢູ່ສູນດັດສ້າງຫຼັກ 33 ບ້ານຄຳສະຫວ່າງ ເມືອງໄຊພູທອງ ແຂວງສະຫວັນນະເຂດເມືອງ ນຳໂດຍທ່ານ ກົງແກ້ວ ມີອໍລະຈັກ ປະທານສະພາປະຊາຊົນແຂວງ, ທ່ານ ສອງໄສ ອິນທິແສງ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ທ່ານ ພັທ. ພູມີ ດາວອອນ ອາດສະຜົນທອງ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ພ້ອມດ້ວຍພະນັກງານ-ວິຊາການຈຳນວນໜຶ່ງ.



ໃນການຕິດຕາມຄັ້ງນີ້, ຄະນະໄດ້ຮັບຟັງການລາຍງານຈາກຫົວໜ້າສູນດັດສ້າງຫຼັກ 33 ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານພາຍໃນສູນດັດສ້າງໂດຍສັງເຂບ ເຊິ່ງໃຫ້ຮູ້ວ່າ: ປັດຈຸບັນມີຈຳນວນພົນທັງໝົດ 71 ສະຫາຍ ຍິງ 7 ສະຫາຍ, ມີຄະນະສູນ 5 ສະຫາຍ, ມີ 5 ໜ່ວຍງານ, 1 ໝວດປ້ອງກັນ 1 ສຸກສາລາຄື: ໜ່ວຍງານຫ້ອງການ, ໜ່ວຍງານພະລາທິການ, ໜ່ວຍງານການຜະລິດ, ໜ່ວຍງານສືບສວນ-ສອບສວນ, ໜ່ວຍງານຄຸ້ມຄອງນັກໂທດ-ດັດສ້າງ, ໝວດປ້ອງກັນ ແລະ ສຸກສາລາປະຈຳສູນ. ວິທີການດັດສ້າງຂອງຄ້າຍແມ່ນດັດສ້າງດ້ວຍວິທີຫັກດິບບໍ່ປິ່ນປົວ ໂດຍນຳໃຊ້ມາດຕະການບັງຄັບ-ຄວບຄຸມ ແລະ ຮູບແບບການດຳເນີນວຽກດັດສ້າງ ມີ 2 ແບບຕົ້ນຕໍຄື: ດັດສ້າງທາງດ້ານແຮງງານແມ່ນນຳພາທຳການຜະລິດຝຶກວິຊາອາຊີບ, ປູກຝັງລ້ຽງສັດ, ເຟີນີເຈີ, ແກະສະຫຼັກ, ຈັກສານ ແລະ ດັດສ້າງທາງດ້ານແນວຄິດແມ່ນນຳໃຊ້ການສຶກສາອົບຮົມ ຄື: ວັນອັງຄານ ແລະ ວັນພະຫັດ ວິຊາສະເພາະເຂົ້າສຶກສາອົບຮົມ, ວັນພຸດ ຄະນະສູນເຂົ້າສຶກສາອົບຮົມ ເຊິ່ງເອກະສານທີ່ນຳມາສຶກສາອົບຮົມ ມີ 14 ບົດ ຂອງກົມຄຸມຂັງສົ່ງໃຫ້, ເອກະສານ ກ່ຽວກັບຜົນຮ້າຍຂອງຢາເສບຕິດ, ເອກະສານມູນເຊື້ອວັນສຳຄັນຂອງພັກຂອງຊາດ ແລະ ນິມິນຖູບາມາເທສະໜາທຳ.

ສຳລັບເປົ້າໝາຍທີ່ນຳມາດັດສ້າງ ແມ່ນຜູ້ຕິດສານເສບຕິດປະເພດຕ່າງໆ ທີ່ສ້າງຄວາມບໍ່ສະຫງົບໃນຄອບຄົວ ແລະ ສັງຄົມ ມີ 2 ເປົ້າໝາຍຄື: ດັດສ້າງຄອບຄົວຝາກ; ດັດສ້າງທາງການສົ່ງ (ມົ້ວສຸມ) ແລະ ສະຖິຕິດັດສ້າງ ແຕ່ເດືອນ 1 ປີ 2023 ຫາ ເດືອນ 6 ປີ 2023: ລວມມີ 1.331 ຄົນ, ຮັບເພີ່ມ 455 ຄົນ, ປ່ອຍ 481 ຄົນ, ດັດສ້າງຍັງເຫຼືອຕົວຈິງມີ 1.305 ຄົນ, ສະຖິຕິນັກໂທດ ແຕ່ເດືອນ 1-6 ປີ 2023 ລວມ 3 ຄົນ ປ່ອຍ 2 ຄົນ, ນັກໂທດຍັງເຫຼືອຕົວຈິງ 10 ຄົນ, ຄະດີຢາເສບຕິດ ສານຕັດສິນ 5 ປີ 6 ເດືອນມີ 1 ຄົນ, ດັດສ້າງຕ່າງແຂວງຝາກ 203 ຄົນ, ດັດສ້າງທາງການຝາກ 62 ຄົນ.

ໂອກາດດັ່ງກ່າວ, ຄະນະກໍໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ເຈາະຈີ້ມບາງບັນຫາ ເພື່ອຮູ້ໄດ້ເຖິງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກທີ່ເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດວຽກງານ ເພື່ອຊຸກຍູ້ໃຫ້ມີການຜັນຂະຫຍາຍດ້ານດີທີ່ຄວນສົ່ງເສີມ ແລະ ແກ້ໄຂບັນຫາທີ່ຫຍຸ້ງຍາກ; ນອກນີ້, ຍັງໄດ້ເກັບກຳຄຳສະເໜີຕ່າງໆເພື່ອນຳສະເໜີຂັ້ນເທິງໃຫ້ທິດຊີ້ນຳໃນການພິຈາລະນາແກ້ໄຂຕໍ່ໄປ ສິ່ງສຳຄັນແມ່ນເປັນການຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ດີຂຶ້ນ.

ໃນໂອກາດນີ້, ຄະນະຍັງໄດ້ນຳເອົາເຄື່ອງອຸປະໂພກ-ບໍລິໂພກຈຳນວນໜຶ່ງ ໄປມອບໃຫ້ສູນດັດສ້າງດັ່ງກ່າວ ປະກອບມີ: ຜ້າຫົ່ມ 100 ຜືນ, ເຂົ້າສານ 420 ໂລ ແລະ ນ້ຳດື່ມ 47 ແພັກ ລວມມູນຄ່າທັງໝົດແມ່ນເກືອບ 10,6 ລ້ານກວ່າກີບ.

# ປຶກສາຫາລືການກະກຽມເນື້ອໃນ ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5

(ສພຊ) ໃນຕອນເຊົ້າຂອງວັນທີ 9 ສິງຫາ 2023 ທີ່ຫ້ອງປະຊຸມໃຫຍ່ສະພາປະຊາຊົນແຂວງຫຼວງພະບາງ ໄດ້ເປີດກອງປະຊຸມປຶກສາຫາລືກັບອົງການປົກຄອງແຂວງ ກ່ຽວກັບການກະກຽມບັນດາເນື້ອໃນທີ່ຈະນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໂດຍການເປັນປະທານຂອງທ່ານ ສົມພອນ ສີອຸດົມພັນ ຮອງປະທານສະພາປະຊາຊົນແຂວງຫຼວງພະບາງ, ມີບັນດາທ່ານຜູ້ຕາງໜ້າຈາກພະແນກການເຂົ້າຮ່ວມທັງໝົດ 9 ພະແນກການ ລວມມີ 25 ທ່ານ ຍິງ 8 ທ່ານ.



ກອງປະຊຸມໄດ້ຕົກລົງເປັນເອກະພາບ ກ່ຽວກັບການກະກຽມບັນດາເນື້ອໃນບົດລາຍງານທີ່ຈະນຳຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ຄື: ບົດລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງອົງການປົກຄອງແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງພະແນກແຜນການ ແລະ ການລົງທຶນແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງພະ

ອ່ານຕໍ່ໜ້າ 7

# ສພຂ ຫຼວງນ້ຳທາ ຖອດຖອນບົດຮຽນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5

(ສພຊ) ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມສະຫຼຸບຕີລາຄາ ຖອດຖອນບົດຮຽນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຊຸດທີ II ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ບຸນມາ ພັນດາວົງ ຫົວໜ້າຫ້ອງວ່າການແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງ.



ກອງປະຊຸມໄດ້ຮັບຟັງບົດລາຍງານການສະຫຼຸບຕີລາຄາກ່ຽວກັບການກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຊຸດທີ II ເຊິ່ງກອງປະຊຸມໄດ້ດຳເນີນເປັນເວລາ 3 ວັນ ເລີ່ມແຕ່ວັນທີ 2-4 ສິງຫາ 2023 ດ້ວຍຜົນສຳເລັດອັນຈົບງາມ ແລະ ກອງປະຊຸມສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ແລະ ແຂກຖືກເຊີນ ໄດ້ສຸມໃສ່ປະກອບຄຳເຫັນຕໍ່ເນື້ອໃນທີ່ນຳເຂົ້າໃນກອງປະຊຸມຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ, ເຮັດໃຫ້ການລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມ ໄດ້ຮັບຄະແນນສຽງເຫັນດີເປັນສ່ວນຫຼາຍ ໂດຍສະເລ່ຍ ໃນລະດັບ 96%-100% ເຊິ່ງກອງປະຊຸມຄັ້ງນີ້ ມີເນື້ອໃນທັງໝົດ 7 ເນື້ອໃນ ແລະ ອອກເປັນມະຕິ 5 ສະບັບຄື ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດກາງສະໄໝ (2021-2023) ແລະ ທິດທາງແຜນການທ້າຍສະໄໝ (2023-2025); ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II; ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ (2021-2023), 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການທ້າຍສະໄໝ (2023-2025), ແຜນການ 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ມະຕິກອງປະຊຸມວ່າດ້ວຍການຮັບຮອງເອົາຜົນການປະເມີນຄວາມໄວ້ວາງໃຈຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼືຮັບຮອງເອົາການແຕ່ງຕັ້ງ.

ພ້ອມດຽວກັນນັ້ນ, ຜູ້ແທນກອງປະຊຸມໄດ້ແລກປ່ຽນປະກອບຄຳຄິດເຫັນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ທີ່ສຳເລັດໄປແລ້ວນັ້ນຢ່າງມີຈຸດສຸມ ເປັນຕົ້ນແມ່ນການຕອບຄຳຊັກຖາມຂອງຜູ້ແທນກອງປະຊຸມຕ້ອງຈະແຈ້ງ ແລະ ຮັດກຸມກວ່າເກົ່າ, ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງຂຶ້ນຊີ້ແຈງໂດຍກົງ, ການນຳເອົາມະຕິຂອງກອງປະຊຸມໄປຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ແກ້ໄຂຕົວຈິງຕ້ອງຈະແຈ້ງໃຫ້ເຫັນເປັນຮູບປະທຳ, ການສ້າງມະຕິຂອງກອງປະຊຸມ, ການປະກອບຄຳເຫັນຂອງຜູ້ແທນກອງປະຊຸມ, ເນື້ອໃນໃຈຄວາມ ຕ້ອງຮັດກຸມ ແລະ ຈະແຈ້ງຂຶ້ນກວ່າເກົ່າ ເພື່ອເປັນການຖອດຖອນບົດຮຽນ ເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງຄັ້ງຕໍ່ໄປ ໃຫ້ມີເນື້ອໃນຖືກຕ້ອງຄົບຖ້ວນ, ວ່ອງໄວທ່ວງທັນກັບເວລາ.

ໂອກາດນີ້, ຍັງໄດ້ຮັບຟັງຄຳເຫັນຂອງທ່ານ ຄຳຟອງ ອິນມານີ ທ່ານໄດ້ເອກະພາບ ແລະ ຊົມເຊີຍຕໍ່ກັບຄຳຄິດເຫັນໃນກອງປະຊຸມຄັ້ງນີ້ ແລະ ບັນດາຄຳເຫັນ, ຂໍ້ຄົງຄ້າງ ແມ່ນຈະນຳປຶກສາຫາລື, ແກ້ໄຂ ໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ ທັງຮຽກຮ້ອງໃຫ້ອະນຸກຳມະການກະກຽມເນື້ອໃນຕ່າງໆ ນຳເອົາເນື້ອໃນຈິດໃຈກອງປະຊຸມນີ້ໄປປັບປຸງ, ແກ້ໄຂໃນຂໍ້ຕົກບົກພ່ອງຂອງຕົນ ເພື່ອເຮັດໃຫ້ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງຄັ້ງຕໍ່ໄປ ໃຫ້ທ່ວງທັນເວລາ, ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ຮັບປະກັນຄຸນນະພາບໃຫ້ດີຂຶ້ນກວ່າເກົ່າ.




## ປຶກສາຫາລື...

(ຕໍ່ຈາກໜ້າ 6)

ແນກການເງິນແຂວງ; ບົດລາຍງານການຈັດຕັ້ງປະຕິບັດວຽກງານຂອງອົງການໄອຍະການປະຊາຊົນແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດວຽກງານຂອງສານປະຊາຊົນແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສານປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສະພາປະຊາຊົນແຂວງ.

ນອກຈາກນັ້ນ, ຍັງມີບົດລາຍງານກ່ຽວກັບຂັ້ນຕອນການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດໃນໄລຍະຜ່ານມາ ແລະ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023; ບົດລາຍງານການຈັດຕັ້ງປະຕິບັດວຽກງານການສົ່ງເສີມການປູກຝັງ-ລ້ຽງສັດ ແລະ ການຈຳກັດ, ການນຳເຂົ້າສິນຄ້າກະສິກຳທີ່ແຂວງເຮົາສາມາດຜະລິດໄດ້ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ແລະ ບົດລາຍງານການຈັດຕັ້ງປະຕິບັດວຽກງານປະກັນສຸຂະພາບໃນໄລຍະຜ່ານມາ ແລະ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.



# ຕິດຕາມກວດກາການປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ຢູ່ເມືອງລ້ອງຊານ

(ສພຊ) ເພື່ອປະຕິບັດຕາມກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ, ມະຕິກອງປະຊຸມສະພາປະຊາຊົນແຂວງ ກ່ຽວກັບການຮັບຮອງເອົານິຕິກຳໃຕ້ກົດໝາຍເພື່ອເຮັດໃຫ້ການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນສູງ ພ້ອມທັງສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍ ເຊິ່ງການຕິດຕາມກວດກາ ແລະ ຊຸກຍູ້ຂະແໜງການກ່ຽວຂ້ອງເພື່ອຕິດຕາມກວດກາ ແລະ ຊຸກຍູ້ບັນດາພະແນກການ, ອົງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ໃນການສ້າງ ແລະ ຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໄດ້ມີຂຶ້ນໃນລະຫວ່າງວັນທີ 17-20 ສິງຫາ 2023 ນຳໂດຍທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງໄຊສົມບູນ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີທ່ານ ລີຈົ້ງ ເກຍເປົາ ຮອງປະທານຄະນະກຳມະການ ວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຫົວໜ້າຂະແໜງ ແລະ ພະນັກງານວິຊາການກ່ຽວຂ້ອງ.

ທັງນີ້, ກໍເພື່ອຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງສະພາປະຊາຊົນແຂວງໄຊສົມບູນໃຫ້ສຳເລັດຕາມຄາດໝາຍທີ່ກຳນົດໄວ້, ຊຸກຍູ້ບັນດາພະແນກການ, ອົງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ໃນການຈັດຕັ້ງປະຕິບັດ 4 ນິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນແຂວງໄດ້ຮັບຮອງ ແລະ ເພື່ອເກັບກຳສະພາບການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໃນການຕິດຕາມກວດກາຂອງສະມາຊິກສະພາປະຊາຊົນແຂວງໃນນາມຕົວແທນແຫ່ງສິດອຳນາດຂອງປະຊາຊົນບັນດາເຜົ່າ ຢາກໃຫ້ຂະແໜງການທີ່ກ່ຽວຂ້ອງໃຫ້ມີການເຜີຍແຜ່ ແລະ ເຊື່ອມຊຶມບັນດານິຕິກຳໃຕ້ກົດໝາຍ 4 ສະບັບ ໃຫ້ທົ່ວເຖິງປະຊາຊົນ.

ໃນການຕິດຕາມໄດ້ມີກອງປະຊຸມຮ່ວມກັບບັນອົງການປົກຄອງຂອງເມືອງ ແລະ ອຳນາດການປົກຄອງຂອງບ້ານ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນແຂວງໄຊສົມບູນໄດ້ຮັບຮອງ 4 ສະບັບຄື: ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການກວດສອບມາດຕະຖານກົງເຕີນ້ຳປະປາໝໍ້ນັບໄຟຟ້າ, ຕາຊັ່ງ ແລະ ຫົວປ້ຳຈຳໜ່າຍນ້ຳມັນເຊື້ອໄຟທົ່ວແຂວງໄຊສົມບູນ; ຂໍ້ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງສັດລ້ຽງ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການກຳນົດຫົວໜ່ວຍລາຄາ ຊົດເຊີຍຜົນກະທົບຈາກການລົງທຶນຂອງລັດ. ພ້ອມນັ້ນ, ສະມາຊິກສະພາປະຊາຊົນແຂວງໄດ້ມີການຊັກຖາມ ແລະ ເຈາະຈີ້ມຕໍ່ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຈຳນວນ 4 ສະບັບດັ່ງກ່າວ ເພື່ອມາວິເຄາະ, ວິໄຈຊອກຫາໃຫ້ເຫັນເຖິງຂໍ້ດີ, ຂໍ້ຄົງຄ້າງ, ສາເຫດ ແລະ ວິທີປັບປຸງແກ້ໄຂໃນຕໍ່ໜ້າ.

ພາຍຫຼັງຕິດຕາມ-ກວດກາເກັບກຳຂໍ້ມູນລະອຽດ ຈະໄດ້ເປີດກອງປະຊຸມຮ່ວມກັນເພື່ອລາຍງານຄືນກ່ຽວກັບຜົນໄດ້ຮັບຈາກການເຄື່ອນໄຫວ ແລະ ສັງລວມການລາຍງານຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າ ແລະ ປະກອບຄຳເຫັນ ໃນການສະເໜີໃຫ້ອົງການປົກຄອງແຂວງພິຈາລະນາແກ້ໄຂ ແລ້ວລາຍງານສະພາແຫ່ງຊາດ ແລະ ໂຄງການຜູ້ໃຫ້ທຶນເປັນລາຍລັກອັກສອນຢ່າງລະອຽດ.






# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

ບຸກຄົນທີ່ຈະໄດ້ຮັບນາມມະຍົດສິລະປິນວິຈິດສິນແຫ່ງຊາດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ສິນທຳ, ມີຄວາມຮູ້, ຄວາມສາມາດ ແລະ ຈົງຮັກພັກດີຕໍ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ;

2. ມີຜົນງານດ້ານວິຈິດສິນອັນໂດດເດັ່ນໃດໜຶ່ງ ທີ່ມີຫົວຄິດປະດິດສ້າງ ຊຶ່ງເປັນການປົກປັກຮັກສາ, ອະນຸລັກ, ເສີມຂະຫຍາຍ ເປັນທີ່ຍອມຮັບຂອງສັງຄົມ;

3. ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການສິລະປະວັດທະນະທຳ ໃນແຕ່ລະໄລຍະ, ສ້າງຮຸ່ນຄົນສືບທອດ, ຖ່າຍທອດບົດຮຽນ ແລະ ປະສົບການ ໃຫ້ເພື່ອນຮ່ວມງານຢ່າງຈິງໃຈ;

4. ປະກອບສ່ວນເຂົ້າໃນຂະບວນການສິລະປະວິຈິດສິນ ແລະ ປະກອບອາຊີບດ້ານວິຈິດສິນ ຢ່າງໜ້ອຍ ສິບຫ້າປີ ແລະ ໄດ້ຮັບນາມມະຍົດສິລະປິນວິຈິດສິນດີເດັ່ນມາກ່ອນ.

**ມາດຕາ 55 ສິລະປິນວິຈິດສິນດີເດັ່ນ**

ສິລະປິນວິຈິດສິນດີເດັ່ນ ແມ່ນ ຜູ້ທີ່ໄດ້ຮັບນາມມະຍົດດ້ວຍການຮັບຮອງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຜ່ານກະຊວງພາຍໃນ.

ບຸກຄົນທີ່ຈະໄດ້ຮັບນາມມະຍົດສິລະປິນວິຈິດສິນດີເດັ່ນ ຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ວັກທີສອງ ຂໍ້ 1 ແລະ 2 ຂອງກົດໝາຍສະບັບນີ້ ແລະ ໄດ້ປະກອບສ່ວນເຂົ້າໃນວຽກງານວິຈິດສິນ ແລະ ປະກອບອາຊີບດ້ານວິຈິດສິນຢ່າງໜ້ອຍ ສິບປີ.

**ມາດຕາ 56 ອົງການທີ່ຄົ້ນຄວ້າ ແລະ ສະເໜີໃຫ້ນາມມະຍົດສິລະປິນວິຈິດສິນ**

ອົງການທີ່ຄົ້ນຄວ້າ ແລະ ສະເໜີໃຫ້ນາມມະຍົດສິລະປິນວິຈິດສິນ ມີ ດັ່ງນີ້:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

2. ສະມາຄົມວິຈິດສິນລາວ.

**ມາດຕາ 57 ການປະກອບເອກະສານ**

ເອກະສານປະກອບໃນການສະເໜີຂໍນາມມະຍົດສິລະປິນວິຈິດສິນ ມີ ດັ່ງນີ້:

1. ໜັງສືສະເໜີຂໍນາມມະຍົດ ຈາກອົງການທີ່ສະເໜີໃຫ້ນາມມະຍົດ;

2. ປະຫວັດ, ຜົນງານ ຫຼື ຜະລິດຕະພັນດ້ານວິຈິດສິນຂອງຜູ້ສະເໜີຂໍນາມມະຍົດ;

3. ເອກະສານຢັ້ງຢືນຜົນງານ ຫຼື ຜະລິດຕະພັນດ້ານວິຈິດສິນ ຈາກອົງການຮັບຜິດຊອບທີ່ກ່ຽວຂ້ອງ.

**ມາດຕາ 58 ການພິຈາລະນາໃຫ້ນາມມະຍົດສິລະປິນວິຈິດສິນ**

ການພິຈາລະນາໃຫ້ນາມມະຍົດສິລະປິນວິຈິດສິນ ໃຫ້ອີງຕາມຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນຕົວຈິງຢ່າງຄົບຖ້ວນ, ພາວະວິໄສ ບົນພື້ນຖານເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ແລະ ມາດຕາ 55 ຂອງກົດໝາຍສະບັບນີ້.

ສຳລັບລາຍລະອຽດກ່ຽວກັບຂັ້ນຕອນການພິຈາລະນາໃຫ້ນາມມະຍົດສິລະປິນວິຈິດສິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 59 ນະໂຍບາຍຕໍ່ສິລະປິນວິຈິດສິນທີ່ໄດ້ຮັບນາມມະຍົດ**

ສິລະປິນວິຈິດສິນ ທີ່ໄດ້ຮັບນາມມະຍົດ ໄດ້ຮັບນະໂຍບາຍ ດັ່ງນີ້:

1. ໃບຢັ້ງຢືນ ແລະ ຫຼຽນນາມມະຍົດ;

2. ນະໂຍບາຍ ທີ່ເປັນວັດຖຸ ແລະ ຈິດໃຈ;

3. ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ການຖອນນາມມະຍົດສິລະປິນວິຈິດສິນ**

ນາມມະຍົດສິລະປິນວິຈິດສິນ ຈະຖືກຖອນ ໃນກໍລະນີ ດັ່ງນີ້:

1. ມີການກະທຳທີ່ເສື່ອມເສຍກຽດສັກສີ;

2. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້;

3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;

4. ນຳໃຊ້ນາມມະຍົດສິລະປິນວິຈິດສິນໂດຍບໍ່ຖືກຕ້ອງ.

## ພາກທີ VI
## ການດຳເນີນທຸລະກິດກ່ຽວກັບວິຈິດສິນ

**ມາດຕາ 61 ການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ການດຳເນີນທຸລະກິດກ່ຽວກັບວິຈິດສິນ ແມ່ນ ການລົງທຶນດ້ານວິຈິດສິນ ເພື່ອເປັນການຫາລາຍໄດ້ ແລະ ຜົນຕອບແທນດ້ານເສດຖະກິດ ທັງເປັນການໂຄສະນາ ເຜີຍແຜ່ ວັດທະນະທຳອັນດີງາມຂອງຊາດ ຊຶ່ງປະ ກອບດ້ວຍ:

1. ການວາງສະແດງວິຈິດສິນ;

2. ຫໍພິພິທະພັນວິຈິດສິນ ເອກະຊົນ;

3. ການສ້າງຜະລິດຕະພັນວິຈິດສິນ;

4. ສູນຝຶກອົບຮົມ ແລະ ສະຖານການສຶກສາ ວິຈິດສິນ.

**ມາດຕາ 62 ການວາງສະແດງວິຈິດສິນ**

ການວາງສະແດງວິຈິດສິນ ມີ ສາມປະເພດ ດັ່ງນີ້:

1. ການວາງສະແດງ ເພື່ອເຜີຍແຜ່ໃຫ້ມວນຊົນເຂົ້າຊົມ;

2. ການວາງສະແດງ ເພື່ອການປົກປັກຮັກສາ, ພັດທະນາ, ອະນຸລັກ, ບູລະນະປະຕິສັງຂອນ, ສຶກສາ ແລະ ຄົ້ນຄວ້າວິໄຈ;

3. ການວາງສະແດງ ເພື່ອການຄ້າ.

ສະຖານທີ່ວາງສະແດງ ແລະ ຫ້ອງວາງສະແດງ ຕ້ອງໃຫ້ມີພື້ນທີ່ ທີ່ເໝາະສົມ, ມີອຸປະກອນອຳນວຍຄວາມສະດວກ ຢ່າງພຽງພໍ ຕາມຂະໜາດຂອງສະຖານທີ່ ແລະ ຫ້ອງວາງສະແດງ, ຮັບປະກັນຄວາມປອດໄພ, ມີຄວາມສະດວກສະບາຍ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 63 ຫໍພິພິທະພັນວິຈິດສິນ ເອກະຊົນ**

ຫໍພິພິທະພັນວິຈິດສິນ ເອກະຊົນ ແມ່ນສະຖານທີ່ສະສົມ, ທ້ອນໂຮມ, ເກັບຮັກສາ, ອະນຸລັກ ຜົນງານ ແລະ ຜະລິດຕະພັນວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ເພື່ອວາງສະແດງ ແລະ ເຜີຍແຜ່ ໃຫ້ມວນຊົນເຂົ້າຊົມ.

ຫໍພິພິທະພັນວິຈິດສິນ ເອກະຊົນ ຕ້ອງໃຫ້ມີພື້ນທີ່ ທີ່ເໝາະສົມ, ມີອຸປະກອນອຳນວຍຄວາມສະດວກຢ່າງພຽງພໍ ຕາມຂະໜາດຂອງຫໍພິພິທະພັນວິຈິດສິນ, ຮັບປະກັນຄວາມປອດໄພ, ມີຄວາມສະດວກສະບາຍ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 64 ການສ້າງຜະລິດຕະພັນວິຈິດສິນ**

ການສ້າງຜະລິດຕະພັນວິຈິດສິນ ແມ່ນການດຳເນີນທຸລະກິດກ່ຽວກັບການແຕ້ມ, ຄວັດ, ການແກະ ສະຫຼັກ, ການຫຼໍ່, ການປັ້ນ ຫັດຖະກຳສິນ ແລະ ການດຳເນີນທຸລະກິດສ້າງຜະລິດຕະພັນວິຈິດສິນອື່ນ.

**ມາດຕາ 65 ສູນຝຶກອົບຮົມ ແລະ ສະຖານການສຶກສາ ວິຈິດສິນ**

ສູນຝຶກອົບຮົມ ແລະ ສະຖານການສຶກສາ ວິຈິດສິນ ແມ່ນສະຖານທີ່ ທີ່ດຳເນີນທຸລະກິດ ກ່ຽວກັບການຝຶກອົບຮົມ ແລະ ການສຶກສາວິຈິດສິນ ຊຶ່ງເປັນບ່ອນຖ່າຍທອດຄວາມຮູ້, ຄວາມສາມາດ ແລະ ທັກສະດ້ານວິຊາຊີບ ກ່ຽວກັບວິຈິດສິນ ເປັນຕົ້ນ ການແຕ້ມ, ການຄວັດ, ການແກະສະຫຼັກ, ການຫຼໍ່, ການປັ້ນດິນເຜົາ, ການຈັກສານ, ການພິມ.

**ມາດຕາ 66 ເງື່ອນໄຂການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ການດຳເນີນທຸລະກິດກ່ຽວກັບວິຈິດສິນ ມີເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ ຕາມກົດໝາຍ;

2. ມີຖານະການເງິນ ເພື່ອໃຫ້ສາມາດເຄື່ອນໄຫວດຳເນີນທຸລະກິດ;

3. ມີສະຖານທີ່ ທີ່ເໝາະສົມ ສຳລັບການດຳເນີນທຸລະກິດຢູ່ ສປປ ລາວ;

4. ມີໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ ຮັບໃຊ້ການເຄື່ອນໄຫວດຳເນີນທຸລະກິດ ທີ່ໄດ້ມາດຕະຖານ;

5. ມີບຸກຄະລາກອນ ທີ່ມີວິຊາສະເພາະ, ມີປະສົບການດ້ານວິຈິດສິນ ແລະ ບຸກຄະລາກອນອື່ນທີ່ກ່ຽວຂ້ອງ.

**ມາດຕາ 67 ການສ້າງຕັ້ງ ແລະ ການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ຽວກັບວິຈິດສິນ ຕ້ອງຂໍຂຶ້ນທະບຽນວິສາຫະກິດນຳຂະແໜງການທີ່ກ່ຽວຂ້ອງ ແລະ ຂໍອະນຸຍາດທາງດ້ານວິຊາການນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 68 ການພິຈາລະນາອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວ ຕ້ອງພິຈາລະນາທາງດ້ານວິຊາການ ໃນການອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບທີ່ກ່ຽວຂ້ອງ ເປັນຕົ້ນໄປ.

**ມາດຕາ 69 ການໂຈະ, ການຖອນ ຫຼື ການຢຸດເຊົາ ການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ອົງການຄຸ້ມຄອງວຽກງານວິຈິດສິນ ສາມາດໂຈະການເຄື່ອນໄຫວ, ຖອນໃບອະນຸຍາດ ຫຼື ໃຫ້ຢຸດເຊົາການດຳເນີນທຸລະກິດກ່ຽວກັບວິຈິດສິນ ຖ້າວິສາຫະກິດຫາກບໍ່ເຄື່ອນໄຫວດຳເນີນທຸລະກິດ ໄປຕາມຈຸດປະ ສົງ, ເນື້ອໃນ, ຮູບແບບ ແລະ ປະເພດການດຳເນີນທຸລະກິດທີ່ໄດ້ຮັບອະນຸຍາດ.

ໃນກໍລະນີວິສາຫະກິດທີ່ດຳເນີນທຸລະກິດກ່ຽວກັບວິຈິດສິນ ມີຈຸດປະສົງຢຸດເຊົາການເຄື່ອນໄຫວດຳເນີນທຸລະກິດດັ່ງກ່າວ ຕ້ອງແຈ້ງເປັນລາຍລັກອັກສອນ ຢ່າງຊ້າ ສາມສິບວັນ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການທີ່ກ່ຽວຂ້ອງ.

## ພາກທີ VII
## ສະມາຄົມວິຈິດສິນລາວ

**ມາດຕາ 70 ສະມາຄົມວິຈິດສິນລາວ**

ສະມາຄົມວິຈິດສິນລາວ ແມ່ນການຈັດຕັ້ງສັງຄົມວິຊາຊີບທີ່ສ້າງຕັ້ງຂຶ້ນຕາມລະບຽບການ ແລະ ຮັບຮູ້ໂດຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີພາລະບົດບາດ ເປັນໃຈກາງ, ເຄື່ອນໄຫວ ແລະ ເຕົ້າໂຮມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວກ່ຽວກັບວິຈິດສິນ, ປະສານສົມທົບກັບການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ, ປະກອບສ່ວນໃນການປະຕິບັດແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງສະມາຄົມວິຈິດສິນລາວ**

ສະມາຄົມວິຈິດສິນລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມການສ້າງ ແລະ ການພັດທະນາ ຂະບວນການກ່ຽວກັບວຽກງານວິຈິດສິນໃນຂອບເຂດທົ່ວປະເທດ;

2. ໂຄສະນາ ເຜີຍແຜ່ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວິຈິດສິນ;

3. ຊຸກຍູ້, ສົ່ງເສີມ ແລະ ໃຫ້ການສະໜັບສະໜູນ ການເຄື່ອນໄຫວ ແລະ ການພັດທະນາວິຈິດສິນ;

4. ຄຸ້ມຄອງ, ຮຽກໂຮມສະມາຊິກສະມາຄົມ ເຂົ້າຮ່ວມກອງປະຊຸມຂອງຕົນ;

ອ່ານຕໍ່ສະບັບໜ້າ




# ກິນຢູ່ບໍ່ໃຫ້ເດືອດຮ້ອນ

\# ດົ້ນກິບເມກ




ຜູ້ຂຽນຄິດວ່າ: ໃນຍຸກເສດຖະກິດແບບທີ່ພວກເຮົາພົບພໍ້ໃນປັດຈຸບັນນີ້ ຖ້າໃຜກິນຢູ່ບໍ່ເປັນ ໃຊ້ຈ່າຍຟຸມເຟືອຍ ບໍ່ຮູ້ຈັກປັບປ່ຽນນິໄສ ຍ່ອມພົບກັບບັນຫາຊີວິດແນ່ນອນ, ບາງຄົນເຄີຍກິນເຄີຍໃຊ້ຫຼາຍ ປັບໂຕບໍ່ໄດ້ ຈຶ່ງໄປຢືມເງິນມາຈ່າຍ ແຕ່ກຳລັງໃຊ້ຄືນບໍ່ມີ ພາໃຫ້ເກີດບັນຫາ ດັ່ງນັ້ນ, ກິນເປັນ ຢູ່ເປັນ ຊີວິດກໍຈະເປັນສຸກ, ຢ່າກິນຮ້ອນນອນທຸກ ໝາຍຄວາມວ່າຢືມເຂົາມາຈ່າຍກິນ, ຢືມເງິນມາປຸກເຮືອນ ເວລານອນກໍໄດ້ມີກ່າຍໜ້າຜາກ ຄິດເປັນທຸກ ຫາເງິນມາໄຊ້ເຈົ້າໜີ້.

ຖ້າບໍ່ຢາກເດືອດຮ້ອນ ຕ້ອງເຂົ້າໃຈໂລກ, ເຂົ້າໃຈເງິນທີ່ເປັນທັງມິດ ແລະ ສັດຕູ ຖ້າວ່າເຮົາມີເງິນອອມເກັບປະຢັດໄວ້ ເງິນກໍເປັນເພື່ອນທີ່ດີ ເກີດດອກອອກຜົນ ແຕ່ຖ້າວ່າເຮົາຢືມເງິນມາ ເງິນກໍຈະເປັນສັດຕູເຮົາ ຕ້ອງໄດ້ຊິດໄຊ້ແກ້ໄຂ, ເບິ່ງໂລກເບິ່ງຊີວິດໃຫ້ເປັນ ຕ້ອງເບິ່ງວ່າຈີນມື້ນີ້ ເພື່ອລວຍມື້ໜ້າ ດີກວ່າລວຍມື້ນີ້ຈົນມື້ໜ້າ, ການໃຊ້ຊີວິດບໍ່ໃຫ້ເດືອດຮ້ອນຕໍ່ມາຕ້ອງກິນຢູ່ໃຊ້ຈ່າຍບໍ່ໃຫ້ເກີນລາຍໄດ້ ຄືຈຶ່ງມີເງິນໃຊ້ ແຕ່ຢ່າໃຊ້ເງິນທີ່ຕົນມີເກີນລາຍໄດ້.

ການປະຢັດອົດອອມໃຊ້ຈ່າຍເງິນ ບໍ່ແມ່ນສິ່ງໜ້າລະອາຍ ແຕ່ການເປັນໜີ້, ເປັນຂີ້ປາກນິນທາສັງຄົມນັ້ນ ເປັນສິ່ງທີ່ໜ້າລະອາຍແກ່ໃຈ.

ການໃຊ້ຊີວິດ ຕ້ອງປັບປ່ຽນ ນອກຈາກມີລາຍໄດ້ຫຼັກເປັນເງິນເດືອນ ຍັງຕ້ອງມີລາຍໄດ້ສຳຮອງ ແລະ ລາຍໄດ້ເສີມຖ້າເຮັດໄດ້? ຖ້າປຽບເງິນຄືນ້ຳທີ່ໄຫຼເຂົ້າໄຫໂຕ່ງໄວ້ ເຮົາກໍສາມາດໄດ້ນ້ຳ (ເງິນ) ເຕັມໄຫ ຖ້າວ່າມີໄຫຼເຂົ້າເທື່ອລະໜ້ອຍ, ເງິນນັ້ນ ສຳລັບບາງຄົນ ເວລາໄດ້ມາອາດຈະແຈ້ງປານເປີດໄຟໄວ້ເຫັນໝົດສູ່ບ່ອນ ແຕ່ເວລາໃຊ້ຈ່າຍ ເງິນໜີຈາກພໍປານປິດໄຟມືດແປດດ້ານ ດັ່ງນັ້ນ, ຊັບສິນສົມບັດມັນເພີ່ມພູນມັ່ງຄັ່ງຢູ່ນຳແຕ່ຜູ້ຮູ້ຈັກໃຊ້ຈ່າຍ, ສະແຫວງຫາອົດອອມ...

ການປັບປ່ຽນນິໄສ ພຶດຕິກຳບໍ່ໃຊ້ຈ່າຍເກີນລາຍໄດ້, ບໍ່ຕາມໃຈປາກ ບໍ່ຂີ່ຕາມຊ້າງ... ອາດເປັນວິທີນີ້ທໍ່ນັ້ນ ຈະຊ່ວຍຊີວິດເຮົາຍາມເສດຖະກິດຝືດເຄືອງ- ຢ່າລືມວ່າການປະຢັດ ບໍ່ແມ່ນສິ່ງໜ້າລະອາຍແກ່ໃຈດອກ ແຕ່ເປັນສິ່ງທີ່ມີກຽດຕ່າງຫາກ!



## ຂຽນຄຳລາວໃຫ້ຖືກ

\#ດູແສງ

| ຖືກ | ຜິດ |
|---|---|
| ອັກເສບ | ອັບເສບ |
| ພ່າຍແພ້ | ຜ່າຍແຜ້ |
| ທີ່ຢູ່ອາໄສ | ທີ່ຢູ່ອາໃສ |
| ເມືອງເນົ່າ | ເມືອງໜົ່າ |
| ອຸບປະພູມ | ອຸບນະພູມ |
| ລັດຖະສາດ | ລັດທະສາດ |
| ເຄື່ອງອາໄຫຼ່ | ເຄື່ອງອາໄລ່ |
| ສະໜິດສະໜົມ | ສະນິດສະນົມ |
| ທົວສ່ຳໝາກກອກ | ທົວຊ່ຳໝາກກອກ |

# ລັດຖະທຳມະນູນ ແຫ່ງ ສປປລາວ

ໂດຍ: ຄົນອື່ນ

ລັດຖະທຳມະນູນແຫ່ງ ສປປ ລາວ ແມ່ນກົດໝາຍພື້ນຖານຂອງ ສປປ ລາວ ສະແດງເຖິງເຈດຈຳນົງຂອງປະຊາຊົນລາວບັນດາເຜົ່າ ທີ່ປະກອບດ້ວຍບັນດາຊັ້ນຄົນຕ່າງໆໃນສັງຄົມ ທີ່ກຳນົດລະບອບການເມືອງ, ເສດຖະກິດ-ສັງຄົມ ແລະ ພັນທະພື້ນຖານຂອງພົນລະເມືອງ, ກົງຈັກແຫ່ງ ສປປ ລາວ.

ລັດຖະທຳມະນູນຂອງ ສປປ ລາວ ເປັນລັດຖະທຳມະນູນທີ່ຮັບໃຊ້ໃຫ້ແກ່ຜົນປະໂຫຍດລວມຂອງປະຊາຊົນລາວບັນດາເຜົ່າ, ເພາະອຳນາດທັງໝົດເປັນຂອງປະຊາຊົນ ຕາມລະບອບປະຊາທິປະໄຕປະຊາຊົນ ດັ່ງທີ່ກຳນົດໄວ້ໃນມາດຕາ 3 ຂອງລັດຖະທຳມະນູນ “ລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນລັດຂອງປະຊາຊົນ ອຳນາດທັງໝົດເປັນຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ເຊິ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ບັນຍາຊົນເປັນຫຼັກແຫຼ່ງ”.

ລັດຖະທຳມະນູນ ຍັງກຳນົດ ແລະ ຊີ້ໃຫ້ເຫັນທິດທາງກ້າວເດີນໃນອະນາຄົດຍາວນານ ດັ່ງໃນຄຳນຳໄດ້ກ່າວໄວ້ວ່າ: “ສ້າງປະເທດຊາດໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ”. ລັດຖະທຳມະນູນໄດ້ສ້າງຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າໃນການສືບຕໍ່ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງບັນດາປະຖົມປັດໃຈກ້າວໄປສູ່ສັງຄົມນິຍົມໃນອະນາຄົດ.

ພ້ອມນັ້ນ, ລັດຖະທຳມະນູນ ຍັງຕິດພັນແໜ້ນແຟ້ນກັບໜ້າທີ່ການເມືອງ, ແນວທາງນະໂຍບາຍຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງພັກ ໄດ້ວາງອອກໃນການສືບຕໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງບັນດາປະຖົມປັດໃຈໃຫ້ແກ່ການກໍ່ສ້າງສັງຄົມນິຍົມໃນອະນາຄົດ, ເນື້ອໃນພື້ນຖານຂອງມະຕິກອງປະຊຸມໃຫຍ່ຄັ້ງທີ V ໄດ້ເຂົ້າສູ່ໃນລັດຖະທຳມະນູນ; ລັດໄດ້ຜັນຂະຫຍາຍແນວທາງນະໂຍບາຍຂອງພັກເປັນອັນລະອຽດເປັນກົດໝາຍພື້ນຖານ. ດັ່ງນັ້ນ, ລັດຖະທຳມະນູນ ຈຶ່ງຖືວ່າເປັນໃຈກາງຂອງກົດໝາຍ ສປປ ລາວ ເພາະລັດຖະທຳມະນູນໄດ້ກຳນົດລະບອບການເມືອງ, ກົງຈັກລັດ ໝາຍວ່າ ກຳນົດຫຼັກການ, ບັນດາບັນຫາທີ່ກວມລວມກວ່າໝູ່ຂອງລະບອບປະຊາທິປະໄຕປະຊາຊົນ ແລະ ພື້ນຖານດ້ານນິຕິໄນ ໃຫ້ແກ່ການສ້າງລະບົບກົດໝາຍ ແຫ່ງ ສປປ ລາວ ໝາຍວ່າ ທຸກນິຕິກຳ ຕ້ອງສອດຄ່ອງກັບລັດຖະທຳມະນູນ.

ລັດຖະທຳມະນູນຂອງ ສປປ ລາວ ມີພາລະບົດບາດທັງປົກປັກຮັກສາ ແລະ ທັງກໍ່ສ້າງ ຄື: ປົກປັກ ຮັກສາລະບອບປະຊາທິປະໄຕປະຊາຊົນ, ປົກປັກຮັກສາໝາກຜົນຂອງການປະຕິວັດ, ປາບປາມສັດຕູພາຍໃນ ແລະ ພາຍນອກ ທັງກໍ່ສ້າງລະບອບໃໝ່, ພື້ນຖານເສດຖະກິດໃໝ່, ວັດທະນາທຳອັນດີງາມ ແລະ ຄົນຮຸ່ນໃໝ່ໃຫ້ເປັນພົນລະເມືອງດີ

ພ້ອມນັ້ນ, ລັດຖະທຳມະນູນ ມີໜ້າທີ່ກຳນົດລະບອບການເມືອງ, ເສດຖະກິດ-ສັງຄົມ, ທາດແທ້ຊົນຊັ້ນຂອງອຳນາດລັດ, ແນວທາງການເມືອງພາຍໃນ ແລະ ຕ່າງປະເທດ, ສິດ ແລະ ພັນທະ ຂອງພົນລະເມືອງ, ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ ແລະ ເປັນກົດໝາຍພື້ນຖານ, ໃຈກາງຂອງລະບຽບກົດໝາຍ ແລະ ຍຸດທະສາດ ດ້ານກົດໝາຍ ຂອງ ສປປລາວ. ພ້ອມທັງສຶກສາອົບຮົມປະຊາຊົນໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ເຊີດຊູສະຕິເປັນເຈົ້າຂອງປະເທດຊາດ ແລະ ສະຕິເຄົາລົບກົດໝາຍ.

ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັດຈຸບັນ (2015) ແມ່ນປະກອບມີຄື: ຄຳນຳ, ໝວດທີ 1 ລະບອບການເມືອງ ມີ 12 ມາດຕາ, ໝວດທີ 2 ລະບອບເສດຖະກິດ - ສັງຄົມ ມີ 18 ມາດຕາ, ໝວດທີ 3 ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ 3 ມາດຕາ, ໝວດທີ 4 ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ມີ 18 ມາດຕາ, ໝວດທີ 5 ສະພາແຫ່ງຊາດ ມີ 13 ມາດຕາ, ໝວດທີ 6 ປະທານປະເທດ ມີ 4 ມາດຕາ, ໝວດທີ 7 ລັດຖະບານ ມີ 7 ມາດຕາ, ໝວດທີ 8 ສະພາປະຊາຊົນທ້ອງຖິ່ນ ມີ 9 ມາດຕາ, ໝວດທີ 9 ອົງການປົກຄອງທ້ອງຖິ່ນ ມີ 5 ມາດຕາ, ໝວດທີ 10 ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ມີ 14 ມາດຕາ, ໝວດທີ 11 ການກວດສອບແຫ່ງລັດ ມີ 4 ມາດຕາ, ໝວດທີ 12ຄະນະກຳມະການເລືອກຕັ້ງ ມີ 2 ມາດຕາ, ໝວດທີ 13 ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ, ສະກຸນເງິນ ແລະ ນະຄອນຫລວງ ມີ 7 ມາດຕາ, ໝວດທີ 14 ບັນຍັດສຸດທ້າຍ ມີ 3 ມາດຕາ.





## ສຸຂະພາບທາງກາຍ-ທາງໃຈ ສຸກສະບາຍຫາຍໂຣຄາ

# ກິ່ນປາກ

**ໂດຍ: ຄູນນະພາບ**



ບັນຫາທີ່ພາໃຫ້ມີກິ່ນປາກ ແມ່ນເກີດຈາກໂຣກກ່ຽວກັບແຂ້ວ, ແຂ້ວຜ່ອຍເປັນຮູບກວ້າງ, ແຂ້ວປອມ ຊະນິດທີ່ຖອດໄດ້ແລ້ວມີເສດອາຫານຕິດຄ້າງ, ການຫຼັ່ງຂອງນ້ຳລາຍ ແລະ ຄົນທີ່ສູບຢາ; ນອກຈາກນີ້, ຍັງມີໂຣກປອດ ຫຼື ມະເຮັງປອດ, ໂຣກກ່ຽວກັບລະບົບຍ່ອຍອາຫານ, ໂຣກຂອງລະບົບຂັບຖ່າຍ; ວິທີທົດສອບວ່າຕົນເອງມີກິ່ນປາກ ຫຼືບໍ່ ແມ່ນໃຫ້ເອົາອົ້ງມືປິດປາກ ແລະ ດັງ ແລ້ວເປົ່າລົມແຮງໆອອກຈາກປາກ ແລະ ສູດດົມເບິ່ງ ຫຼື ບາງຄົນ ກໍສາມາດໃຊ້ວິທີແຫຍ່ນິ້ວມື ຫຼື ອາດໃຊ້ນິ້ວມືຖູບໍລິເວນເຫືອກແລ້ວດົມເບິ່ງ.

ກິ່ນປາກ ແຍກອອກເປັນ 4 ປະເພດຄື: ກິ່ນປາກທີ່ມາຈາກລີ້ນ ຫຼື ກ້ອງລີ້ນ, ເຫືອກ ແລະ ແຂ້ວຜ່ອຍ ຫຼື ເລືອດອອກຕາມຫວ່າງແຂ້ວ, ກິ່ນຈາກແຂ້ວ ແລະ ກິ່ນຈາກຄວັນຢາສູບ; ບໍລິເວນທີ່ພົບກິ່ນປາກເລື້ອຍໆແມ່ນລີ້ນ, ເຫືອກ, ແຂ້ວ ແລະ ຂອບແຂ້ວ.

ແຕ່ຖ້າທ່ານບໍ່ຢາກມີກິ່ນປາກ ຄວນປະຕິບັດດັ່ງນີ້:

- ຢ່າປ່ອຍໃຫ້ປາກແຫ້ງ ເພາະເວລາປາກແຫ້ງ ຄວາມເຂັ້ມຂຸ້ນຂອງແບັກທີເຣຍໃນປາກຈະເພີ່ມຂຶ້ນ ເຮັດໃຫ້ເກີດມີກິ່ນປາກໄດ້ງ່າຍ.
- ພະຍາຍາມດື່ມນ້ຳຫຼາຍໆ ເພາະວ່ານ້ຳຈະຊ່ວຍລ້າງແບັກທີເຣຍອອກ.
- ຖູແຂ້ວທຸກຄັ້ງຫຼັງຈາກກິນອາຫານ ແລະ ຢ່າລືມຖູເຫືອກ, ລີ້ນ ແລະ ກ້ອງລີ້ນນຳ ເພາະເປັນໜຶ່ງສາເຫດຂອງກິ່ນປາກ.
- ໃຊ້ໄໝຂັດແຂ້ວ(ເຊືອກຈີ້ມແຂ້ວ) ມື້ລະ 2-3 ຄັ້ງ.
- ຖ້າບໍ່ສະດວກທີ່ຈະຖູແຂ້ວ ໃຫ້ບ້ວນປາກດ້ວຍນ້ຳລ້າ ຫຼື ນ້ຳຢາບ້ວນປາກ
- ຫຍໍ້າໝາກຝຣັ່ງ (ຊີງອົ້ມ)
- ງົດອາຫານກິ່ນແຮງເຊັ່ນ: ກະທຽມ, ຫອມບົ່ວ, ພິກໄທ ແລະ ເນີຍແຂງ (ຊີດ).
- ກິນອາຫານໃຫ້ຄົບ 5 ໝູ່
- ເຊົາສູບຢາ ເພາະການສູບຢາ ນອກຈາກຈະເປັນອັນຕະລາຍຕໍ່ສຸຂະພາບ ແລະ ຍັງເປັນປັດໄຈເຮັດໃຫ້ເປັນໂຣກເຫືອກ, ເຟັນແຂ້ວອັກເສບຮຸນແຮງຕື່ມອີກ; ພ້ອມນັ້ນ, ກິ່ນຂອງຢາສູບທີ່ຕິດຄ້າງຢູ່ໃນປາກປະສົມກັບກິ່ນອື່ນໆ ເຮັດໃຫ້ມີກິ່ນປາກ ແລະ ມີກິ່ນເໝັນທີ່ຮຸນແຮງ.
- ຄວນໄປພົບທັນຕະແພດ ເພື່ອກວດສຸຂະພາບແຂ້ວຢ່າງສະໝ່ຳສະເໝີ ໂດຍບໍ່ຈຳເປັນຕ້ອງລໍຖ້າໃຫ້ມີບັນຫາປາກ ແລະ ແຂ້ວ;

**ຂໍ້ມູນຈາກ ວາລະສານອັບເດດ**




# ເມື່ອອຳນາດໃໝ່ມາມື

**(ເນື່ອງໃນວັນຍຶດອຳນາດ 23 ສິງຫາ)**

**#ຊຽງເອງ**

✻ ຍຶດອຳນາດຂາດຂັ້ນ ມາຢູ່ໃນມື ແລ້ວນັ້ນ
ທີ 23 ສິງຫາ ລືກຽງນໄຊກ້າ
ປວງປະຊາຊາວເຊື້ອ ດີໃຈຊົມຊື່ນ
ເມື່ອຫຼຸດພົ້ນຜ່ານຂ້າມ ເມືອງຂຶ້ນຕ່າງແດນ

✻ ແສນເດືອດຮ້ອນ ທົນທຸກທໍລະມານ ຄາວນັ້ນ
ປະຕິການ ລູກມືເມືອງຂຶ້ນ
ເລ່ກິນຮ້າຍ ທຳລາຍຜູ້ຄິດຕ່າງ
ດາບຢູ່ເໜືອຄໍຢູ່ໃຕ້ ປະຊາທິປະໄຕແອບອ້າງ ວາງໄວ້ເພື່ອລວງ

✻ ແມ້ງເມື່ອອຳນາດເຂົ້າ ເປົ້າຢູ່ມືປະຊາ ເຮົານັ້ນ
ໝັ່ນຮັກສາດູແລ ໃຫ້ແກ່ນຄົງແຂງກ້າ
ເປັນເຄື່ອງມືຄົມກ້າ ຜະເດັດການກຳມະຊີບ
ປາບປາມມານໝູ່ຮ້າຍ ໃຫ້ຫາຍສິ້ນຈາກແຜ່ນດິນ

✻ ຢ່າໃຫ້ອາຍກິ່ນຮ້າຍ ລະບອບເນົ່າປະຕິການ
ສິ່ງກິ່ນເໝັນຄືນມາ ກີດຂວາງຄວາມກ້າວ
ສໍ້ລາດບັງຫຼວງນັ້ນ ພັນທຸກຳລະບອບເກົ່າ
ຕ້ອງເອົາມັນມອດມ້ຽນ ຕາຍພ້ອມລະບອບຫຼັງ

✻ ທຸກຢ່າງເຮັດໃຫ້ໄດ້ ຄືດັ່ງປະຕິຍານ
ຊື່ສັດບໍລິສຸດ ໂປ່ງໃສຈະແຈ້ງ
ສາມັກຄີຄືເສົາຄ້ຳ ເປັນໃຈດຽວເດັດດ່ຽວ
ພັກນຳພາ-ລັດຄຸ້ມຄອງຍຶດໝັ້ນ ເດີນໜ້າພັດທະນາ

✻ ສ້າງໃຫ້ດິນຖິ່ນນີ້ ເຮືອງຮຸ່ງສີວິໄລ
ກ້າວດຸ່ງໄປຕາມຍຸກ ພັດທະນານຳໜ້າ
ສົມວ່າລາວເປັນເຈົ້າ ດິນແດນເອກະລາດ
ລຶບລ້າງຄວາມທຸກໄຮ້ ມໍລະດົກຊົ່ວຮ້າຍ ນາຍເມືອງຂຶ້ນເຮັດມາ

ຂໍຈົ່ງເປືອງປິ່ນໜ້າ ໃຈໃສ່ສາມັກຄີ
ເພີ່ມທະວີກຳລັງແຮງ ແກ່ນແຂງຂານສູ້
ອຳນາດໃນມືແລ້ວ ກະທຳການເດັດດ່ຽວ
ສ້າງດິນແດນຖິ່ນນີ້ ໃຫ້ທຽມເທົ່າຖິ່ນຈະເລີນ ແທ້ງເດີ!






## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ *ໂອ***ກາດນີ້ຂໍຝາກຖາມຂ່າວເບື້ອງ *ກ້າຝ່າຍ* **ສພຊ** *ເປັນແນວໃດແດ່ ວຽກກຽມຄວາມພ້ອມ ກອງປະຊຸມສະໄໝສາມັນ 5 ຂອງສະພາແຂວງທົ່ວປະເທດ* **ຫຼາຍແຂວງ ກໍຈັດໄປຮຽບຮ້ອຍ** *ກຽມພ້ອມເຄື່ອນໄຫວ ຍັງຫຼາຍແຂວງພວມເລັ່ງສູ້ ສຸມໃສ່ກະກຽມ ປະຕິບັດຕາມແຜນ ສຳເລັດຜົນຕາມເປົ້າ ຂໍໃຫ້ເອົາໃຈສູ້ ອົດທົນຜ່ານຜ່າ ປະຊາລາວທົ່ວໜ້າ ອາໄສຊົ້ນເພິ່ງອີງ* **ທ່ານເອີຍ!**

✻ **ຫຍັບໃກ້ ວາລະເປີດສົກຮຽນໃໝ່** *ຫຼາຍໂຮງຮຽນກໍໄດ້ ກະກຽມຄວາມພ້ອມ ທັງພໍ່ແມ່ ແລະ ນ້ອງນັກຮຽນ ກໍເຊັ່ນດຽວກັນ ພາກັນຫາຊອກຊື້ ອາພອນໃໝ່ສີບງາມ ທັງສໍສີປາກກາ ເຄື່ອງຊຸດ ກຽມພ້ອມ ມີແຕ່ຄອງຄອຍຖ້າ* **1 ກັນຍາປະກາດປ່າວ** *ພາກັນເຂົ້າສູ່ຮົ້ວ ໂຮງຮຽນນັ້ນບ່ອນໝາຍ* **ຊອບແລ້ວ!**

## ຊອບຍິ້ມ

**# ແອ່ບຕຸ້ງ**

### ຕູ້ລົ້ມ

ບາງ ກະແປ໋ດ ແລ່ນຕາຕື່ຕາລານໄປຫາແມ່ຢູ່ເຮືອນຄົວ ພ້ອມທັງລາຍງານ ວ່າ:

\+ ແມ່ໆ ຕູ້ເຄື່ອງນຸ່ງລົ້ມ

-ໄປບອກພໍ່ມຶງພຸ້ນ ມາບອກແມ່ເຮັດຫຍັງ, ແມ່ຄາແຕ່ງກິນ

\+ ພໍ່ຮູ້ແລ້ວ ເພາະຕອນນີ້ລາວຢູ່ກ້ອງຕູ້

- ?!?!



## ຄະຕິເຕືອນໃຈ

**#ດອກຫຍ້າ**

ເຫັນຄົນອື່ນເຮັດຊົ່ວ ຢ່າຟ້າວຕິ
ເຫັນຄົນອື່ນເຮັດດີ ຢ່າຟ້າວຍ້ອງ
ແຕ່ເຮົາຕ້ອງ ຄ່ອຍໆພິຈາລະນາ




# ໂລກະທັດ

"ໂລກະທັດ" ເປັນຄຳສັບທີ່ເລີ່ມໃຊ້ຢູ່ໃນວົງການການສຶກສາການເມືອງ ໂດຍສະເພາະແມ່ນໃນວິຊາປັດຊະຍາ ເມື່ອປະມານຫ້າສິບປີມານີ້.

ໃນປຶ້ມ"ຄວາມຮູ້ພື້ນຖານປັດຊະຍາມາກ-ເລນິນ" ພິມປີ 1985 ໂດຍສຳນັກພິມກ້າວໜ້າ ມົດສະກູ ໜ້າ 6 ໄດ້ປາກົດມີຄຳວ່າ "ໂລກະທັດ" ໃນຫຍໍ້ໜ້າທີ 3: "ປັດຊະຍາກໍ່ຕັ້ງທັດສະນະຂອງຄົນກ່ຽວກັບໂລກເວົ້າລວມ, ຕະຫຼອດທັງຄວາມເຂົ້າໃຈຕໍ່ໂລກ. ດັ່ງນັ້ນປັດຊະຍາເຮັດໃຫ້ຄົນມີພື້ນຖານທິດສະດີທົ່ວໄປກ່ຽວກັບຄວາມເຂົ້າໃຈຕໍ່ໂລກ ຫຼື "ໂລກະທັດ".

ຄຳນີ້ເປັນຄຳແປມາຈາກຄຳເຄົ້າພາສາເຢຍລະມັນ Weltanschauung [ˈvɛltʔanˌʃaʊ.ʊŋ] ປະກອບດ້ວຍ Welt ("world") ແລະ Anschauung ("perception" ຫຼື "view") ເຊິ່ງພາສາອັງກິດໃຊ້ຄຳວ່າ World view. ມັນເປັນແນວຄິດພື້ນຖານຂອງປັດຊະຍາເຢຍລະມັນ ແລະໝາຍເຖິງການຮັບຮູ້ໃນໂລກກວ້າງ.

ຄຳວ່າ "ໂລກະທັດ" ເປັນຄຳປະສົມແບບສະໝາດຈາກເຄົ້າປາລີ-ສັນສະກິດ ເຊິ່ງປະກອບດ້ວຍຄຳວ່າ Loka (लोक) "ໂລກະ" ທີ່ໝາຍເຖິງ "ໂລກ" ແລະ Dassna, Darśana (दर्शन) "ທັດສະນະ" ທີ່ຕັດຫຍໍ້ມາເປັນ "ທັດ" ໝາຍເຖິງ "ການເຫັນ, ສິ່ງທີ່ເຫັນ". ເມື່ອສອງຄຳນີ້ມາປະສົມເຂົ້າກັນເປັນ "ໂລກະທັດ" ກໍໄດ້ຄວາມໝາຍວ່າ "ການເບິ່ງໂລກ, ການຮັບຮູ້ໂລກ, ການທີ່ຄົນເຮົາແຕ່ລະຄົນຕີຄວາມໝາຍສິ່ງຕ່າງໆໃນໂລກ ຫຼືເຫັນວ່າສັບພະສິ່ງໃນໂລກມີປະຕິສຳພັນກັນແນວໃດ ເຊັ່ນ

- ຄົນເຮົາຈະມີໂລກະທັດແນວໃດນັ້ນ ແມ່ນຂຶ້ນຢູ່ກັບວັດທະນະທຳ ແລະສິ່ງແວດລ້ອມໃນສັງຄົມຂອງຕົນ ເຊັ່ນ ຄົນເອີຣົບກັບຄົນອາຊີມີໂລກະທັດຕ່າງກັນ.

- ການທ່ອງທ່ຽວເຮັດໃຫ້ເຮົາມີໂລກະທັດທີ່ກວ້າງຂວາງ ແລະປັບໂຕເຂົ້າກັບສັງຄົມໄດ້ດີຂຶ້ນ ສອດຄ່ອງກັບຄຳສຸພາສິດລາວທີ່ກ່າວໄວ້ວ່າ "ບໍ່ອອກຈາກບ້ານ ບໍ່ເຫັນດ່ານແດນໄກ ບໍ່ໄປຊອກຫາຮຽນ ບໍ່ຫ່ອນມີຄວາມຮູ້".

ຈົນມາຮອດຊຸມປີ 2000 ຄຳວ່າ "ໂລກະທັດ" ຈຶ່ງເຫັນມີບັນທຶກໄວ້ໃນວັດຈະນານຸກົມພາສາລາວ ຂອງ ດຣ. ທອງຄຳ ອ່ອນມະນີສອນ ປີ 2008 ເຊິ່ງເພິ່ນໄດ້ໃຫ້ນິຍາມຄຳນີ້ວ່າ "ການເບິ່ງໂລກຢ່າງສັດຈະວິພາກ, ທັດສະນະເບິ່ງໂລກຕາມຄວາມເປັນຈິງ".

# ສະມາຊິກລັດຖະສະພາຊຸດໃໝ່ກຳປູເຈຍ ສາບານຕົນເຂົ້າຮັບຕຳແໜ່ງ

*ສະພາແຫ່ງຊາດ ຊຸດທີ VII ຂອງກຳປູເຈຍ ໄດ້ເປີດກອງປະຊຸມຂຶ້ນຢ່າງເປັນທາງການ ມີສະມາຊິກສະພາ 125 ທ່ານ ໄດ້ສາບານຕົວເຂົ້າຮັບຕຳແໜ່ງຢູ່ພະລາຊະວັງໃນວັນດຽວກັນ.*




ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນຕອນເຊົ້າວັນທີ 21 ສິງຫາ 2023 ລັດຖະສະພາກຳປູເຈຍ ຊຸດທີ VII ໄດ້ຈັດກອງປະຊຸມຄັ້ງປະຖົມມະລືກຂຶ້ນຢ່າງເປັນທາງການ ພາຍໃຕ້ການເປັນປະທານຂອງທ່ານ ສົມເດັດ ພະບໍລົມມະນຽດ ໂນໂຣດົມ ສີຫາມຸນີ ເຈົ້າຊີວິດກຳປູເຈຍ ເຊິ່ງກອງປະຊຸມໄດ້ຮັບຮອງເອົາບັນຊີລາຍຊື່ຂອງສະມາຊິກສະພາຊຸດໃໝ່ ແລະ ກົດລະບຽບຂອງລັດຖະສະພາຊຸດໃໝ່.

ສະພາແຫ່ງຊາດກຳປູເຈຍ ຊຸດທີ VII ປະກອບດ້ວຍສະມາຊິກທັງໝົດ 125 ທ່ານ ໃນນັ້ນ, ມີ 120 ທ່ານ ມາຈາກພັກປະຊາຊົນກຳປູເຈຍ ແລະ ມີ 5 ທ່ານມາຈາກພັກຟູນຊິນເປັກກຳປູເຈຍ.

ໃນວັນຕໍ່ມາ, ສະພາແຫ່ງຊາດກຳປູເຈຍ ໄດ້ເລືອກຕັ້ງທ່ານ ຮຸນ ມາເນັດ ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີຄົນໃໝ່ ອາຍຸການ 2023-2028 ເຊິ່ງທ່ານ ຮຸນ ມາເນັດ ເກີດໃນວັນທີ 20 ຕຸລາ 1977 ເປັນລູກຊາຍກົກຂອງສົມເດັດ ເຕໂຈ ຮຸນ ແຊນ.

ທ່ານສົມເດັດພະບໍລົມມະນຽດ ໂນໂຣດົມ ສີຫາມຸນີ ຍັງສະແດງຄວາມເຊື່ອໝັ້ນວ່າ: ລັດຖະບານໃໝ່ໂດຍທ່ານ ຮຸນ ມາເນັດ ເປັນນາຍົກລັດຖະມົນຕີ ຈະສົມກັບຄວາມໄວ້ເນື້ອເຊື່ອໃຈຂອງສະພາແຫ່ງຊາດ, ສືບຕໍ່ນຳມາເຊິ່ງສັນຕິພາບ ແລະ ສະຖຽນລະພາບ, ການພັດທະນາເສດຖະກິດໃຫ້ແກ່ກຳປູເຈຍ.

ພ້ອມດຽວກັນນີ້, ບັນດາສະມາຊິກສະພາແຫ່ງຊາດກຳປູເຈຍ ຊຸດທີ VII ຍັງໄດ້ຮັບຮອງເອົາໂຄງຮ່າງກົງຈັກການນຳສະພາແຫ່ງຊາດ ແລະ ສະມາຊິກລັດຖະບານອາຍຸການໃໝ່.

# ນາຍົກລັດຖະມົນຕີໄທຄົນໃໝ່

ໃນວັນທີ 22 ສິງຫານີ້ ໄດ້ມີການລາຍງານຂ່າວວ່າ: ທ່ານ ພອນເພັດ ຮອງປະທານລັດຖະສະພາໄທ ໄດ້ເປີດເຜີຍໃຫ້ຮູ້ວ່າ: ທ່ານ ເສດຖາ ທະວີສິນ ຜູ້ສະໝັກຮັບເລືອກຕັ້ງນາຍົກລັດຖະມົນຕີ ທີ່ສະເໜີຊື່ໂດຍພັກເພື່ອໄທ ໄດ້ຮັບສຽງສະໜັບສະໜູນຈາກສະມາຊິກລັດຖະສະພາຫຼາຍກວ່າເຄິ່ງໜຶ່ງໃນກອງປະຊຸມຮ່ວມຂອງສະ



ພາສູງ ແລະ ສະພາຕ່ຳທີ່ຈັດຂຶ້ນໃນມື້ດຽວກັນ ແລະ ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີໄທຄົນໃໝ່.

ທ່ານ ເສດຖາ ທະວີສິນ ເປັນຜູ້ສະໝັກຮັບເລືອກຕັ້ງນາຍົກລັດຖະມົນຕີພຽງຜູ້ດຽວທີ່ຖືກສະເໜີຊື່ ແລະ ໄດ້ຮັບສຽງສະໜັບສະໜູນ 482 ສຽງຈາກສະມາຊິກລັດຖະສະພາ 728 ທ່ານ ທີ່ເຂົ້າຮ່ວມລົງຄະແນນສຽງ. ກ່ອນໜ້ານີ້ ທ່ານ ເສດຖາ ທະວີສິນ ໄດ້ກ່າວຜ່ານສື່ສັງຄົມອອນລາຍວ່າ: ເປົ້າໝາຍການເປັນນາຍົກລັດຖະມົນຕີແມ່ນເພື່ອແກ້ໄຂຄວາມທຸກຍາກ, ຄວາມບໍ່ສະເໝີພາບ, ຊ່ວຍພັດທະນາເສດຖະກິດຂອງໄທ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ອື່ນໆ.

# ໃນງານເອັກສໂປຈີນ-ອາຊີໃຕ້ ຄັ້ງທີ 7 ບັນລຸການເຊັນສັນຍາ 483 ໂຄງການ

ຕາມຂ່າວ CRI ໃຫ້ຮູ້ວ່າ: ວັນທີ 20 ສິງຫາຜ່ານມາ, ງານວາງສະແດງສິນຄ້າຈີນ-ອາຊີໃຕ້ ຫຼື ງານເອັກສໂປຈີນ-ອາຊີໃຕ້ ຄັ້ງທີ 7 ທີ່ດຳເນີນໄປເປັນເວລາ 5 ວັນ ໄດ້ສິ້ນສຸດລົງຢູ່ນະຄອນຄຸນໝິງ ແຂວງຢຸນໜານ ສປ ຈີນ, ຄະນະກຳມະການຮັບຜິດຊອບງານເອັກສໂປຈີນ-ອາຊີໃຕ້ ຄັ້ງທີ 7 ໄດ້ຈັດກອງປະຊຸມຖະແຫຼງຂ່າວໃຫ້ຮູ້




ວ່າ: ໃນງານເອັກສໂປຄັ້ງນີ້ໄດ້ບັນລຸການເຊັນສັນຍາ 483 ໂຄງການ ໃນນັ້ນ, ໄດ້ເຊັນສັນຍາການລົງທຶນ 342 ໂຄງການ, ມີຍອດມູນຄ່າການລົງທຶນ 412.654 ຕື້ຢວນ; ໄດ້ເຊັນຂໍ້ຜູກພັນດ້ານການຄ້າ 141 ສະບັບ ມີຍອດມູນຄ່າ 10.511 ຕື້ໂດລາ.

ແຫຼ່ງຂ່າວຍັງໃຫ້ຮູ້ຕື່ມວ່າ: ຕາມການຄາດຄະເນຍອດມູນຄ່າການຈຳໜ່າຍໂດຍລວມຢູ່ຫ້ອງສະແດງທາງອັອບລາຍຂອງງານເອັກສໂປຈີນ-ອາຊີໃຕ້ຄັ້ງນີ້ ຈະບັນລຸ 60 ລ້ານຢວນ, ຍອດມູນຄ່າການຈຳໜ່າຍໂດຍລວມຜ່ານທາງອອນລາຍຈະບັນລຸ 210 ລ້ານຢວນ ເຊິ່ງໄດ້ດຶງດູດຜູ້ແທນແລະແຂກຜູ້ມີກຽດ, ວິສາຫະກິດວາງສະແດງຜ່ານທາງອອນລາຍແລະ ອັອບລາຍທັງໝົດຫຼາຍກວ່າ 3 ໝື່ນກວ່າແຫ່ງທີ່ມາຈາກ 85 ປະເທດ, ເຂດແຄວ້ນແລະອົງການຈັດຕັ້ງສາກົນມາເຂົ້າຮ່ວມກອງປະຊຸມ ແລະ ງານວາງສະແດງ.




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ກ) ພະຍາດໂລພາ:**

ຄົນຜູ້ຕິດພະຍາດນີ້ ກໍມັກແຕ່ຍົກຜົນປະໂຫຍດສ່ວນຕົວເອງ ຂຶ້ນສູງກວ່າຜົນປະໂຫຍດຂອງພັກ ແລະ ຂອງຊາດ, ຍ້ອນແນວຄິດນັ້ນ ຈຶ່ງເກີດມີໃຈມັກແຕ່ໄດ້ແຕ່ດີ, ຫາແຕ່ກຳໄລ ມັກເອົາແຕ່ຂອງສ່ວນລວມ ເຮັດວຽກສ່ວນຕົວ ມັກອາໄສຊື່ສຽງ ແລະກຳລັງຂອງພັກ ມາຊອກຫາຜົນປະໂຫຍດສ່ວນຕົວເອງ.

ຄົນຈຳພວກນີ້ ມັກຢູ່ກິນຟູມເຟືອຍ ໃຊ້ຈ່າຍຕະພຶດຕະພື ເງິນຄຳເຫຼົ່ານັ້ນເອົາໃສມາ? ບໍ່ເອົາຂອງພັກ ກໍເອົາຂອງພີ່ນ້ອງຮ່ວມຊາດຂອງຕົນ ຈົນເຖິງເຮັດຕະຫຼາດມືດຂາຍຂອງທີ່ຕ້ອງຫ້າມ, ບໍ່ຢ້ານເສຍຊື່ສຽງຂອງພັກ, ບໍ່ຢ້ານເສຍຊື່ສຽງຂອງຕົນເອງ.

**ຂ) ພະຍາດຂີ້ອົ່ງ:**

ອວດວ່າຕົນດີ, ອວດວ່າຕົນເກັ່ງ, ທວງເອົາຖານະຕຳແໜ່ງ ຢາກໄດ້ແຕ່ໜ້າຕາ, ມັກໃຫ້ຜູ້ອື່ນຍ້ອງຍໍ ແລະ ຍົກຍໍຕົນຂຶ້ນ, ມັກແຕ່ແນະນຳສັ່ງສອນຜູ້ອື່ນ. ເມື່ອເຮັດວຽກຫຍັງພຽງແຕ່ສຳເລັດເລັກໆນ້ອຍໆ ກໍເອົາໄປອວດອ້າງຢ່າງນັນເນືອງ, ຖືວ່າຜູ້ອື່ນບໍ່ທໍ່ໂຕຈັກຄົນ, ບໍ່ທຸລະຮ່ຳຮຽນນຳປະຊາຊົນ, ບໍ່ຢາກໃຫ້ຜູ້ອື່ນຕຳໜິ ເຮັດອັນໃດກໍຢາກເປັນນາຍ ສັ່ງໃຫ້ຜູ້ອື່ນເຮັດ.

ອ່ານຕໍ່ສະບັບໜ້າ...



ເຝົ້າເບິ່ງ ໄດ້ຍິນ ດັ່ງຮຽນ

❖ ວິເສດ ສະແຫວງສຶກສາ

# ແກ້ໄຂບັນຫາຄົນຂໍທານ ດ້ວຍມາດຕະການທີ່ເໝາະສົມ

ບັນຫາຄົນຂໍທານນີ້ ຢູ່ປະເທດໃດກໍມີ, ຕ່າງແຕ່ວ່າມີໜ້ອຍມີຫຼາຍ, ມີແບບປະຈຳ ຫຼື ແບບລະດູການ. ຢູ່ປະເທດເຮົາເດລະ ທ່ານຜູ້ອ່ານຄິດວ່າແນວໃດ? ມີບໍ່ ຄົນທີ່ຍຶດເອົາການຂໍທານເປັນອາຊີບ?. ຜູ້ຂຽນ ເຄີຍໄດ້ຍິນສຽງຈົ່ມວ່າ ຢູ່ລາວພວກເຮົານີ້ ຈຳນວນຄົນຂໍທານມັກຈະເພີ່ມຂຶ້ນໃນໄລຍະແລ້ວວຽກໄຮ່ການນາ ຫຼື ຍາມມີເທສະການບຸນໃຫ່ຍໆ ໂດຍສະເພາະແມ່ນ ຢູ່ນະຄອນຫຼວງວຽງຈັນ ແລະ ຕົວເມືອງໃຫຍ່ອື່ນໆ. ແຕ່ຫຼັງໆມານີ້, ສັງເກດເຫັນວ່າບັນຫາຄົນຂໍທານ, ຄົນຈໍລະຈັດຂ້າງຖະໜົນໄດ້ຫຼຸດໜ້ອຍຖອຍລົງນີ້ ກໍສະແດງວ່າວິທີແກ້ໄຂບັນຫານີ້ຂອງພວກເຮົາເລີ່ມໄປຖືກຈຸດແລ້ວ.

ໃນທ້າຍປີ 2014, ມີຂ່າວອອກມາຈາກນະຄອນໂຮ່ຈີ່ມິງ, **ຫວຽດນາມ** (ໜັງສືພິມເສດຖະກິດ 24/12/2014) ທີ່ໃຫ້ຮູ້ວ່າ ທາງການຂອງນະຄອນແຫ່ງນີ້ ໄດ້ເອົາມາດຕະການຈິງຈັງຕັ້ງໜ້າ ເພື່ອແກ້ໄຂບັນຫາຄົນຂໍທານ-ຄົນຂ້າງຖະໜົນ ໂດຍໄດ້ອອກປະກາດຂໍຮ້ອງບັນດານັກທ່ອງທ່ຽວຕ່າງປະເທດ ແລະ ບຸກຄົນທົ່ວໄປ ຢຸດໃຫ້ເງິນ ຫຼື ປັດໄຈຕ່າງໆແກ່ຄົນຂໍທານທີ່ພົບເຫັນຕາມສະຖານທີ່ໃດກໍຕາມ ເພາະຖືວ່າການໃຫ້ເງິນ ຫຼື ວັດຖຸແກ່ຄົນຂໍທານ-ຄົນຂ້າງຖະໜົນນັ້ນ ຈະກາຍເປັນເຫຍື່ອອ່ອຍໃຫ້ເກີດມີຄົນຂໍທານຫຼາຍຂຶ້ນ ເພາະເຫັນວ່າເປັນອາຊີບງ່າຍດາຍໄດ້ເປັນໄວ ໂດຍບໍ່ໄດ້ອອກແຮງງານ. ນອກຈາກນັ້ນ, ທາງການຂອງນະຄອນ ໂຮ່ຈີ່ມິງ ຍັງມີກຳນົດຫ້າມພະສົງອອກແຜ່ເງິນນອກຈາກການບິນທະບາດຕາມປົກກະຕິ. ທີ່ຕ້ອງມີການຫ້າມນັ້ນກໍແມ່ນເພື່ອກຳຈັດພະສົງປອມ-ພະສົງແຕກປອກນອກຄອງທີ່ອາໄສຜ້າເຫຼືອງບັງໜ້າຊອກຫາລາຍໄດ້. ທາງການໄດ້ຕິດຕັ້ງລະບົບໂທລະສັບສາຍດ່ວນ ໃຫ້ທຸກຄົນໃນສັງຄົມຊ່ວຍເປັນຫູເປັນຕາ ໃນການແກ້ໄຂບັນຫາຄົນຂໍທານ ກໍຄືຄົນພະເນຈອນ. ຂ່າວບອກວ່າ ຄົນຂໍທານໃນນະຄອນແຫ່ງນີ້ສ່ວນຫຼາຍແມ່ນໄປຈາກຕ່າງແຂວງ. ສ່ວນວິທີແກ້ໄຂນັ້ນ ກໍຄືທາງການໄດ້ຊ່ວຍອົບຮົມວິຊາຊີບອັນຈຳເປັນໃຫ້ບັນດາຄົນຂໍທານ, ຊ່ວຍໃຫ້ສະຖານທີ່ພັກເຊົາ, ຫຼັງຈາກນັ້ນກໍສົ່ງພວກເຂົາກັບຄືນຖິ່ນເດີມ. ໃນກໍລະນີມີຄົນຂໍທານທີ່ຖືກສົ່ງກັບແລ້ວ ພັດກັບຄືນມາຂໍທານອີກ. ທາງການກໍຈະເອົາຜູ້ກ່ຽວເຂົ້າສູນບຳບັດ ແລະ ຝຶກວິຊາຊີບ ເປັນໄລຍະຍາວ, ສ່ວນຄົນຂໍທານທີ່ມີບັນຫາທາງຈິດນັ້ນກໍຈະໄດ້ຮັບການປິ່ນປົວຕາມອາການຢູ່ສະຖານທີ່ຟັກຟື້ນ ແລະ ຝຶກອາຊີບ.

ອີກຂ່າວໜຶ່ງກໍແມ່ນ ຂ່າວ ບັນຫາຄົນຂໍທານຖືກເຊື່ອງຊ້ອນຢູ່ໃນຂະບວນການຄ້າມະນຸດເຂົ້າໄປໃນປະເທດ **ສະວີເດັນ** (ຊູແອດ) ( ຂ່າວ The Nation 14/2/2016) ຂ່າວບອກວ່າເຈົ້າໜ້າທີ່ຕຳຫຼວດຂອງປະເທດນີ້ ໄດ້ຈັບກຸມສອງອ້າຍນ້ອງຄົນບູນກາຣີ ທີ່ເປັນຫົວໂປ່ໂຕການຈັດຕັ້ງກຸ່ມຄົນຂໍທານເຂົ້າໄປເຄື່ອນໄຫວຢູ່ໃນສະວີເດັນ ໃນຮູບການຄ້າມະນຸດ. ສອງອ້າຍ ນ້ອງທີ່ກ່າວມານັ້ນເຄື່ອນໄຫວບັງຄັບຄົນເຖົ້າ, ຄົນພິການ, ຄົນກືກໜັງສື, ແມ່ຍິງ ແລະ ເດັກນ້ອຍທີ່ຍາກຈົນເຂົ້າໄປຂໍທານຢູ່ເມືອງໂກເທັນເບີກ. ທາງພາກໃຕ້ຂອງສະວີເດັນ. ສອງອ້າຍນ້ອງຈອມໂຫດນີ້ ອອກກົນອຸບາຍຕົ້ມຕົວະເຫຍື່ອວ່າ ຊິຊອກວຽກເຮັດທີ່ມີລາຍໄດ້ງາມໆໃຫ້ ແຕ່ເມື່ອໄປຮອດຈຸດໝາຍ ແລ້ວກໍຕົກເປັນຄົນຂໍທານ ຊອກຂໍທານເອົາເງິນເຂົ້າຖົງສອງນັກຫຼອກລວງຂັ້ນອິນເຕີນັ້ນເອງ. ໃນຄັ້ງທີສອງອ້າຍນ້ອງຖືກຈັບໄດ້ນີ້, ຜູ້ທີ່ຕົກເປັນເຫຍື່ອຂອງພວກເຂົາໄດ້ແກ່ ຜູ້ເຖົ້າບຳນານ ອາຍຸ 69 ປີ, ຄົນພິການກືກໜັງສື ອາຍຸ 21 ປີ ແລະ ແມ່ເຖົ້າຕາບອດ ອາຍຸ 62 ປີ. ຂ່າວມ້ວນທ້າຍວ່າ, ຄົນຂໍທານທັງສາມໄດ້ສ້າງລາຍຮັບໃຫ້ສອງອ້າຍນ້ອງສູງເຖິງ 30.000 ເອີໂຣ.




## ມັນບໍ່ແປກດອກ

*#ບ່າວກະບື*

ລັນ: "ເອີບື້ສູນ... ພໍ່ໂຕເປັນນາຍຄູແທ້ໆ ແຕ່ນ້ອງສາວໂຕພັດອ່ານໜັງສືໂຕດຽວກໍບໍ່ໄດ້".

ສູນ: "ມັນແປກບ່ອນໃດ? ພໍ່ໂຕຫັ້ນເປັນນາຍໝໍປົວແຂ້ວແທ້ໆ ແຕ່ນ້ອງຊາຍນ້ອຍໂຕຫັ້ນ ແຂ້ວເຫຼັ້ມດຽວກໍບໍ່ມີ".

## SO WHAT?

*#BAOKBU*

Chanh: "Soune, your father is a teacher, but your sister doesn't even know how to read a letter."

Soune: "So what? your father is a dentist and your little brother doesn't even have a single tooth."

ອ່ານມ່ວນ ຊວນຍິ້ມ



ພູຊາດປ່າ ຝົນມາເລີຍນ້ຳຖ້ວມ

● ໂດຍ : ພູຜາ

ທະນາຄານພັດທະນາລາວ LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ອຸດສາຫະກຳ ຈົ່ງຈູ້
中鉅實業

ຮ້ານຄຳພູວົງ PHOUVONG JEWELRY

SCNG SOMCHAYNEUK GROUP

**ຜູ້ຊີ້ນຳ :** ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສິສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ;
ນາງ ສຸພາວັນ ທອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ